# ປະຫວັດຊີວິດ ແລະ ຜົນງານ

## ພຣະອາຈາຣຍ໌ ພູມ ເດຊວິງສາ (ວັດປ່າວິໂມກຂ໌ ຈຳປັກແຮດ)

## ໂດຍ ຄະນະເຜີຍແຜ່ ພຸທທະທັມ



ຈັດພິມເຜີຍແຜ່ໂດຍ ຄະນະເຜີຍແຜ່ພຸທະທັມ
ເນື່ອງໃນງານຖວາຍພຣະເພີງສົບ ທ່ານພຣະອາຈາຣຍ໌ ພູມ ເດຊວິງສາ
ພ.ສ 2551 ຄ.ສ 19/10/2008

# <u>ສາລະບານ</u>


| ລ.ດ | | ໜ້າ |
|---|---|---|
| 1. | ຊາດຕະກຳເນີດ | 1 |
| 2. | ຊີວິດບົນເສັ້ນທາງການສຶກສາ | 2 |
| 3. | ຊີວິດບົນເສັ້ນທາງລາດຊະການ | 3 |
| 4. | ຊີວິດການຄອງເຮືອນ | 4 |
| 5. | ການດຳເນີນຊີວິດບົນເສັ້ນທາງໂລກີຍະ | 4 |
| 6. | ການເດີນເຂົ້າສູ່ຮົ່ມຜ້າກາສາວະພັດແລະການເຜີຍແຜ່ທັມ | 8 |
| 7. | ແນວທາງການເຜີຍແຜ່ທັມ | 14 |
| 8. | ກ່ຽວກັບຊີວິດສ່ວນຕົວຂອງທ່ານ | 19 |
| 9. | ພຸທທະທັມ ກ່ຽວກັບລູກສິດທ່ານ | 20 |
| 10. | ບັ້ນທ້າຍຊີວິດ | 23 |
| 11. | ຄະຕິທັມພຣະອາຈາຣຍ໌ ພູມ ເດຊວິງສາ | 26 |
| 12. | ບົດຄວາມວິທີເຮັດໃຫ້ອາຍຸຍືນ (ຢາອາຍຸວັຕຖະນະ) | 30 |

# ປະຫວັດຊີວິດ ແລະ ຜົນງານ

## ພຣະອາຈາຣຍ໌ ພູມ ເດຊວົງສາ (ວັດປ່າວິໂມກຂ໌ ຈຳປັກແຮດ)

### ໂດຍ ຄະນະເຜີຍແຜ່ ພຸທທະທັມ



ຈັດພິມເຜີຍແຜ່ໂດຍ ຄະນະເຜີຍແຜ່ພຸທະທັມ

ເນື່ອງໃນງານຖວາຍພຣະເພີງສົບ ທ່ານພຣະອາຈາຣຍ໌ ພູມ ເດຊວົງສາ

ພ.ສ 2551 ຄ.ສ 19/10/2008

# ປະຫວັດຊີວິດແລະຜົນງານ

**ພຣະອາຈາຣຍ໌ ພູມເດຊວິງສາ**(ວັດປ່າວິໂມກຂ໌ຊຳປັກແຮດ)

## ຄະນະເຜີຍແຜ່ພຸທທະທັມ

1. ພຣະອາຈາຣຍ໌ ທິງວິໄລ ໂພທິຍານ
2. ພຣະອາຈາຣຍ໌ ທະວີໄຊ ພູມປະເສີດ
3. ພຣະອາຈາຣຍ໌ ບຸນເລີຍ ໂພທິຍານ
4. ພຣະອາຈາຣຍ໌ ພຸທທະຈັກ ໂພທິຍານ
5. ພຣະອາຈາຣຍ໌ ວຽງສັກ ກັນຍານະທັມໂມ

## ໃຫ້ຂໍ້ມູນຊີວະປະຫວັດ

- ພຣະອາຈາຣຍ໌ບົວທອງ (ສວນວັດທະນະທຳ)
- ແມ່ຂາວສຸບັນ (ວັດປ່າຊຳປັກແຮດ)
- ແມ່ຂາວຂັນທອງ (ວັດປ່າຊຳປັກແຮດ)
- ຈາກຄະນະສິດສານຸສິດທົ່ວໄປ
- ຈາກບົດເທສະນາທີ່ພຣະອາຈາຣຍ໌ບັນຍາຍເອງ

## ພິມຄອມພິວເຕີ ແລະ ກວດສອບພະຍັນຊະນະ

- ພຣະອາຈາຣຍ໌ ພຸທທະຈັກ ໂພທິຍານ
- ສຳມະເນນ ໄຊຍະສິດ (ປາວິນ) ວົງສັກດາ

# ຄຳນຳຂອງ ຄະນະຈັດພິມ

ຄົນໆ ນຶ່ງຕັ້ງແຕ່ ເກີດຂຶ້ນ .ດຳລົງຊີວິດຢູ່ ແລ້ວກໍຈາກ ໄປຕາມກົດທຳມະຊາດ ຍ່ອມມີທີ່ມາທີ່ໄປ ມີການກະທຳຕ່າງໆຫລາຍຢ່າງ ມີປະສົບການ ມີຜົນງານທັງທີ່ເປັນປະໂຫຍດ ແລະ ບໍ່ເປັນປະໂຫຍດ ເຊິ່ງມີ ກິເລສ. ກັມ. ວິບາກ ເປັນວັຕຕະຈັກ ໝູນວຽນຢູ່ຢ່າງນີ້ເລື້ອຍໆ.

ດັ່ງນັ້ນຊີວິດຄົນນຶ່ງໆ ຍ່ອມມີປະຫວັດ. ການດຳເນີນຊີວິດຢູ່.ແລະການກະທຳຫລາຍໆ ຢ່າງແຕກຕ່າງກັນໄປ. ຈົນກ່ວາຈະຈາກໂລກໄປ. ຍິ່ງເກີດນານ.ຍິ່ງມີປະສົບການ ແລະ ມີຜົນງານຫລາຍ

ຊີວະປະຫວັດ ເປັນສິ່ງນຶ່ງ ທີ່ຢັ້ງຢືນໄດ້ວ່າ. ເຂົາຄົນນັ້ນເກີດມາເພື່ອອັນໃດ ແລ້ວໄດ້ທຳຢ່າງໃດຕໍ່ເພື່ອນມະນຸດ ເພາະການເກີດມາຂອງຄົນເຮົານັ້ນ. ມີຈຸດໝາຍ ມີເປົ້າໝາຍ ບໍ່ເໝືອນກັນ. ບາງຄົນກໍເກີດມາເພື່ອ ທຳໃຫ້ໂລກຮ້ອນຮົນເປັນໄຟ. ຍາດຍຽນທຳຮ້າຍກັນ. ແລ້ວກໍຈາກໂລກໄປ ບໍ່ໄດ້ຫຍັງເກີດຂຶ້ນ. ບາງຄົນເກີດມາ ເພື່ອທຳໃຫ້ໂລກໜ້າຢູ່ແລະ ກ້ວາງຂວາງມາກຂຶ້ນ ປາຖະນາ ໃຫ້ເພື່ອນມະນຸສ ຢູ່ເຢັນເປັນສຸກແລ້ວກໍກາຍເປັນໂພທິສັດ ທີ່ມີຄົນຂາບໄຫວ້ສັກກາລະບູຊາ. ນັ່ງຢູ່ໃນດວງໃຈຂອງ ແຕ່ລະຄົນ ແລ້ວກໍຈາກໂລກໄປ ພວກເຮົາທຸກຄົນລອງຖາມຕົວເອງວ່າເຮົາເກີດມາເພື່ອຫຍັງ ?...

ຊີວະປະຫວັດ ແລະ ຜົນງານ ທີ່ທ່ານຖືຢູ່ນີ້ ເປັນສ່ວນນຶ່ງຂອງຊີວິດ ພຣະອາຈາຣຍ໌ ໃຫຍ່ ພູມ ເດຊວິງສາ ຄະນະເຜີຍແຜ່ ວິປັດສະນາກັມມະຖານ ອ.ພ.ສ ສູນກາງ.ທີ່ ຄະນະ ສິດສານຸສິດ ຮົບໂຮມ ເກັບກຳຂໍ້ມູນຈາກການສົນທະນາ ຈາກການ ບັນລະຍາຍທັມຂອງທ່ານເອງ ແລະຈາກຜູ້ຢູ່ໃກ້ສິດທ່ານ ຜູ້ຮ່ວມງານກັບທ່ານ. ຖືວ່າຕັ້ງແຕ່ເກີດມາ ດຳລົງຊີວິດ ຢູ່ ແລະຈາກໂລກໄປ ທ່ານມີປະສົບການ ແລະ ມີຜົນງານຫລາຍໆ

*ຢ່າງ. ຄະນະສິດສານຸສິດ.;ອອກຕົນຍາດໂຍມທົ່ວໄປ. ພ້ອມນັກຮຽນຮູ້ ປັນຍາຊົນ ຄວນເອົາເປັນຕົວຢ່າງ ເປັນຂໍ້ຄິດ ເປັນກຳລັງໃຈ. ໃນການທີ່ ຈະດຳລົງຊີວິດ ໃຫ້ຢູ່ລອດປ່ອຍໄພ ທັງເປັນປະໂຫຍດຕໍ່ຕົນເອງ ແລະ ເພື່ອນຮ່ວມໂລກ. ເພາະຄົນເຮົາຈະປະສົບຜົນສຳເລັດໄດ້ມັນບໍ່ແມ່ນ ຂອງງ່າຍ. ມັນຕ້ອງມີຄວາມຮູ້. ມີປະສົບການ. ມີຕົວຢ່າງໃຫ້ເບິ່ງ ມີ ນັກປຽຊ ບັນດິດເປັນກັນລະຍານະມິດຊ່ວຍຊີ້ແນະແນວທາງມີສະພາບ ແວດລ້ອມທີ່ອຳນວຍ ຄວາມສະດວກໃຫ້ ມີສຸຂະພາບກາຍໃຈທີ່ສົມບູນ ( ຄືບໍ່ເປັນຄົນບ້າບົນ ຂາດສະຕິ ) ແລະ ມີຄຸນນະທັມປະຈຳໃຈເຫຼົ່ານີ້ ເປັນຕົ້ນຈຶ່ງຈະຜ່ານຜ່າບັນຫານ້ອຍໃຫຍ່ ແລະ ບັນລຸເຖິງຄວາມສຳເລັດ ໄດ້*

*ຊີວະປະຫວັດໃນທີ່ນີ້ ອາດຈະບໍ່ສົມບູນແບບເທົ່າໃດ ເພາະຕ່າງ ຝ່າຍ ຕ່າງຮູ້ຈັກ ຄົນລະມູມຂອງຊີວິດແລະຜົນງານທ່ານ ແຕ່ກໍໄດ້ຮັບ ໂຮມແລະບັນລະຍາຍ ເພື່ອມຸ້ງປະໂຫຍດທີ່ ເປັນກຸສົນ ເປັນຄະຕິເຕືອນ ໃຈ ແກ່ຜູ້ກຳລັງເດີນທາງໄປສູ່ຈຸດມຸ້ງໝາຍ ຂອງຊີວິດ ດັ່ງນັ້ນຄະນະຈັດ ພິມ ຈຶ່ງຂໍອະໄພນຳທ່ານຜູ້ຮູ້ທັງຫລາຍມານະທີ່ນີ້ດ້ວຍ ຫວັງວ່າຜົນງານ ແຫ່ງຊີວິດຂອງ ພຣະອາຈາຣຍ໌ ພູມ ຄົງຈະເປັນກຸນແຈ ໄຂປະຕູແຫ່ງ ປັນຍາແລະກຳລັງໃຈ ໃຫ້ແກ່ທ່ານທັງຫລາຍ ໃນການກ້າວໄປສູ່ ຄວາມ ສຳເລັດຕາມຈຸດມຸ້ງໝາຍຕະຫລອດໄປດ້ວຍເຖີ້ນ..%*

**ຈາກຄະນະກຳມະການຈັດພິມ**

ທີ 15\10\2008.

ໂດຍຄະນະເຜີຍແຜ່ພຸທທະທັມ( ວັດປ່າວິໂມກຂ໌ຊຳປັກຂ໌ແຮດ)

# ປະຫວັດຊີວິດແລະຜົນງານຂອງ

## ພຣະອາຈາຣຍ໌ ພູມ ເດຊວິງສາ ວັດປ່າ ວິໂມກຂ໌ ຊຳປັກແຮດ

## 1. ຊາຕກຳເນີດ

ທ່ານ ພຣະອາຈາຣຍ໌ ພູມ ເດຊວິງສາ ກຳເນີດຢູ່ເຂດພາກໃຕ້ຕອນກາງຂອງປະເທດລາວ ເກີດທີ່ບ້ານເລົ່າໜາດ ເມືອງຈຳພອນ ແຂວງສະຫວັນນະເຂດ ເມື່ອວັນທີ 9|5| ປີ ຄ.ສ. 1931 ຊື່ພໍ່ເຖົ້າ ເພີຍ ຊື່ແມ່ເຖົ້າທາ ມີອ້າຍ ເອື້ອຍ ນ້ອງຮ່ວມກັນ 9 ຄົນ ( ຍິງ 3 ຄົນ ຊາຍ 6ຄົນ ຕາຍ 4 ຄົນ ) ທ່ານເກີດໃນຕະກູນທຸກຍາກ ແຕ່ມີນ້ຳໃຈອົດທົນ ໄຝ່ຮຽນຮູ້ສຶກສາ ມາຕະຫລອດ ທ່ານເປັນລູກຄົນທຳອິດທີ່ອອກຈາກທ້ອງມານດາມາ ເມື່ອໃຫຍ່ກ້າຫນ້າບານມາ ໄດ້ຮຽນຮູ້ ແລະ ໄດ້ຫນ້າທີ່ ຕຳແຫນ່ງດີ ທ່ານກໍທຳຫນ້າທີ່ແທນພໍ່ແມ່ ເບິ່ງແຍງນ້ອງນຸ່ງແຕ່ລະຄົນ ໃຫ້ຄວາມອົບອຸ່ນ ໃຫ້ການສຶກສາຮ່ຳຮຽນ ຕາມຄວາມສາມາດທີ່ຈະທຳໄດ້

ເຖິງທ່ານຈະເກີດໃນຕະກູນທຸກຍາກກໍຕາມ ແຕ່ມີນ້ຳໃຈອົດທົນ ກ້າຫານເສຍສະຫລະ ແລະ ມີຄວາມໄຝ່ສຶກສາເພື່ອຄວາມກ້າວຫນ້າ ມາຕະຫລອດ ດັ່ງນັ້ນຊີວິດຂອງທ່ານ ແລະ ອ້າຍ ເອື້ອຍ ນ້ອງ ທຸກຄົນ ຈຶ່ງມີຄວາມກ້າວຫນ້າ ແລະ ປະສົບຜົນສຳເລັດ ມາຕາມລຳດັບ

## 2. ຊີວິດບົນເສັ້ນທາງ ການສຶກສາ

ທ່ານອາຈາຣຍ໌ ເລີ້ມເຂົ້າຮຽນຢູ່ ປະຖົມບ້ານເລົ່າໜາດໃນປີ ຄ..ສ 1947 ອາຍຸທ່ານຕອນນັ້ນໄດ້17 ປີ ແລ້ວຖືວ່າກາຍກະສຽນນັກ

ຮຽນປະຖົມແລ້ວ ສະໃໝນັ້ນ ໂຮງຮຽນກໍ່ອຶດ ຄູກໍ່ມີນ້ອຍໝົດໂຮງຮຽນມີຄູຄົນດຽວ ທ່ານຮຽນແບບເລັ່ງລັດ ປີດຽວສອບໄດ້ 3 ຊັ້ນຈົບປະຖົມ ຢູ່ທີ່ໂຮງຮຽນ ບ້ານລະຫານຈໍ້ ເມືອງສອງຄອນ ທ່ານຮຽນປະຖົມຢູ່ບ້ານລະຫານຈໍ້ແຕ່ປີ ( 1948-50 ) ຄູຄົນທຳອິດຂອງເພິ່ນ ແມ່ນ ຄູຄຳແສນ ເປັນຄູປະຈຳໂຮງຮຽນບ້ານເພິ່ນ ຄູຄົນທີ 2ແມ່ນຄູ ຈິດປະສິງປະຈຳໂຮງຮຽນ ບ້ານລະຫານຈໍ້ ການຮຽນແຕ່ລະຄັ້ງແມ່ນພໍ່ແມ່ຂອງເພິ່ນເປັນຜູ້ກະຕຸກຊຸກຍູ້ ນຳໄປຝາກຝັງນຳຄູ ແລະ ນຳຍາດຕິພີ່ນ້ອງເພື່ອສະດວກໃນການຮ່ຳຮຽນ ຫລັງຈາກຈົບປະຖົມແລ້ວ ທ່ານກໍ່ເລີ່ມເດີນທາງເຂົ້າສູ່ຕົວເມືອງ ເພື່ອທຳການສຶກສາໃຫ້ສູງໆ ຂຶ້ນໂດຍມາເປັນສັງກະລີວັດ ທີ່ວັດໄຊຍະພູມ ຢູ່ທີ່ນັ້ນ3ປີ ຕັ້ງແຕ່ປີ 1951-54 ຫລັງຈາກຮຽນຈົບມັດທະຍົມຕົ້ນແລ້ວ ທ່ານກໍ່ຢາກສຶກສາມັດທະຍົມຕອນປາຍຕໍ່ແຕ່ຍ້ອນຄວາມທຸກຍາກ ຈຶ່ງບໍ່ສາມາດຮຽນຕໍ່ໄດ້ເພາະໂຮງຮຽນມີແຕ່ນະຄອນຫລວງວຽງຈັນ ແຫ່ງດຽວເທົ່ານັ້ນ ແຕ່ທ່ານເປັນຄົນສະໝອງໃສວ່ອງໄວ ໄຝ່ຮຽນຮູ້ ໄຝ່ສຶກສາມາເລື້ອຍໆ ຊີວິດກໍ່ກ້າວໜ້າແລະ ປະສົບຜົນສຳເລັດມາຕະຫລອດ ທ່ານເຄີຍເວົ້າວ່າ ສະໃໝຄາວຍັງເປັນນັກຮຽນນັ້ນໄດ້ ຮຽນຫ້ອງດຽວກັບນາຍທະຫານຮ້ອຍເອກກອງແລ ເຊິ່ງ ເປັນນັກປະຕິວັດຄົນໜຶ່ງ ທີ່ທຳໃຫ້ລະບອບການເມືອງ ສະໃໝນັ້ນຫວັ່ນໄຫວ ແລະ ເປັນຄົນຮຽນແຂ່ງຂັນກັນ ກັບພຣະອາຈາຣຍ໌ພູມ ຜັດປ່ຽນກັນໄດ້ທີນຶ່ງ ທີສອງ ເລື້ອຍ ໆ ທ່ານເປັນຄົນຈື່ຈຳງ່າຍມັກອ່ານ ມັກຟັງ ແລະ ສົນໃຈການສຶກສາ ຄວາມຮູ້ຮອບຕົວ ເປັນຄົນຈິງຈັງ ຈິງໃຈ ຕໍ່ໜ້າທີ່ສະເໝີ ເຖິງຈະຍາກຈົນແຕ່ກໍ່ມີນ້ຳໃຈອົດທົນເຖິງຈະຮຽນບໍ່ສູງເທົ່າໃດ ແຕ່ມີອຸດົມການຍິ່ງໃຫຍ່ ມີນ້ຳໃຈເສຍສະຫລະ ຮັກພໍ່ແມ່ພີ່ນ້ອງ ແລະບ້ານເກີດເມືອງນອນ ດັ່ງນັ້ນທ່ານຈຶ່ງ ເປັນທີ່ໄວ້ວາງໃຈຈາກສັງຄົມ.ແລະ ພັກລັດ ເພາະມີແວວແຫ່ງຄວາມເປັນ

ຜູ້ນໍາທາງດ້ານສັງຄົມສະເໝີມາ.

## 3.ຊີວິດບົນເສັ້ນທາງ ລາດຊະການ

ຫລັງຈາກຮຽນຈົບທາງດ້ານການສຶກສາແລ້ວ ທ່ານກໍເຂົ້າເປັນພະນັກງານ ຕັ້ງແຕ່ຂັ້ນທໍາມະດາ ຈົນຮອດຂັ້ນສູງ ຈົນໄດ້ຮັບຕໍາແໜ່ງເປັນເລຂາທູດ ແລະ ໄດ້ໄປປະຈໍາການ ຢູ່ໃນຫລາຍປະເທດເປັນຕົ້ນ

- ໃນປີ1954-56ໄດ້ເຂົ້າເປັນລັດທະກອນຢູ່ກົມເບ້ຍບໍານານກະຊວງການເງິນ ຫລັງຈາກນັ້ນ
- ໃນປີ 1957 ທ່ານກໍຂໍເຂົ້າມາເຮັດວຽກຢູ່ກະຊວງການຕ່າງປະເທດ
- ໃນ ປີ 1960-64 ທ່ານໄດ້ຖືກແຕ່ງຕັ້ງ ໃຫ້ໄປເປັນເລຂາທູດລາວໄປປະຈໍາການຢູ່ ບາງກອກ ປະເທດໄທ
- ໃນປີ1972-74 ໄດ້ໄປປະຈໍາການຢູ່ປະເທດ ອັງກິດ ໃນຖານະເປັນເລຂາທູດລາວ
- ປີ 1964 ເປັນຕົ້ນມາທ່ານເລີ່ມເປີດກວ້າງທາງດ້ານການສຶກສາໃນເລື້ອງສາສະນາ ທ່ານກໍໄດ້ໄປຊື້ປື້ມທັມມະອ່ານຈາກປະເທດໄທຫລາຍຮ້ອຍເຫຼັ້ມ ແລະ ທ່ານກໍຫາໂອກາດ ເຂົ້າຫາ ອາຈາຣຍ໌ ປານ ອານັນໂທ ແລະ ອາຈາຣຍ໌ ຊາລີ ກັນຕະສີໂລ ເພື່ອສຶກສາຫລັກສາສະນາໄປພ້ອມ ເມື່ອມີຄວາມຮູ້ຫລັກ ສາສະນາ ພຽງພໍແລ້ວ ທ່ານກໍໄດ້ທໍາໜ້າທີ່ໃນຖານະເປັນຊາວພຸທ ຄືການເຜີຍແຜ່ທັມ ໂດຍສະເພາະວັນເສົາ ຫຼື ອາທິດ ທ່ານຈະບັນລະຍາຍທັມຢູ່ຮົ່ມໄມ້ວັດໂສກປ່າຫລວງ ແລະ ທ່ານເອງກໍເປັນຜູ້ນຶ່ງທີ່ເຂົ້າເປັນ ກໍາມະການໃນການເຜີຍແຜ່ ສາສະນາຖືວ່າທ່ານມີພື້ນຖານ ແລະມີປະສົບການໃນການເຜີຍແຜ່ສາສະນາ ມາແຕ່ດາວຍັງເປັນຄາລະວາດພຸ້ນ
- ໃນປີ 1975-84 ທ່ານໄດ້ຮັບຕໍາແໜ່ງ ເປັນຮອງຫົວໜ້າກົມການເງິນກະຊວງການຕ່າງປະເທດ

*- ໃນປີ 1985 ທ່ານກໍລາອອກຈາກຕຳແໜ່ງແລ້ວ ເຂົ້າບວດໃນພຸທະສາສະນາ ຈົນມໍລະນະພາບ ໃນປີ ຄ.ສ 2008*

## 4.ຊີວິດການຄອງເຮືອນ

*ຫລັງຈາກມີໜ້າທີ່ຕຳແໜ່ງການງານທີ່ດີແລ້ວ ທ່ານກໍຢາກຕັ້ງຫລັກຖານຊີວິດ ຈຶ່ງຄິດທີ່ຈະແຕ່ງງານສ້າງຄອບຄົວເພື່ອໄວ້ສືບສະກຸນຕໍ່ໄປ ທ່ານ ໄດ້ສ້າງຄອບຄົວກັບ ນາງພູສາ ໃນເດືອນ 6 ປີ 1955 ມີລູກຮ່ວມກັນ 6 ຄົນ ຊາຍ 2 ຍິງ 4 ຄົນ ຫລັງຈາກນັ້ນ ທ່ານກໍໄດ້ນຳພາເມຍ ແລະລູກ ສ້າງຖານະຄອບຄົວ ທາຢູ່ຫາກິນໄປຕາມຊີວິດຄົນໃນເມືອງ ແລະ ລ້ຽງລູກຈົນໃຫຍ່ກ້າໜ້າບານເປັນເຮືອນເປັນຊານ ລູກແຕ່ລະຄົນລ້ວນແຕ່ມີຖານະໜ້າທີ່ການງານ ມີຫລັກມີຖານໝົດທຸກຄົນ ບາງຄົນກໍສ້າງຄອບຄົວຢູ່ພາຍໃນປະເທດ ແລະຕ່າງປະເທດກໍມີ*

*ຖ້າເວົ້າແລ້ວຊີວິດການຄອງເຮືອນນັ້ນ ທ່ານມີເສຖະກິດໜ້າທີ່ການງານດີສະເໝີມາ ຈົນວ່າ ພໍໃຊ້ ພໍຈ່າຍ ເຖິງວ່າຊີວິດທາງໂລກຈະພໍຢູ່ ພໍກິນ ພຽງໃດກໍຕາມ ແຕ່ ທາງດ້ານຈິດໃຈ ຂອງທ່ານກໍຍັງຫ່ວງແຫ້ງ ເພາະການບີບຄັ້ນຂອງ ກິເລສ ຕັນຫາ ທ່ານຈຶ່ງຫາວິທີອອກຈາກບັນຫາ ເພື່ອບໍ່ໃຫ້ ຕົກເປັນທາດ ເຍື່ອຂອງໂລກ ສຸດທ້າຍທ່ານກໍອອກບວດຫນີ ຈາກວັດຕະສິງສານ ສະແຫວງຫາ ໂມກຂະທັມຕໍ່ໄປ*

## 5. ການດຳເນີນຊີວິດບົນເສັ້ນທາງໂລກີຍະວິສັຍ

*ທ່ານເຄີຍປະຣົບວ່າ: ຊີວິດໂລກີຍະນັ້ນເປັນຊີວິດທີ່ ສັບສົນຫາຫລັກຖານ ແລະ ທີ່ເພິ່ງອັນແທ້ຈິງບໍ່ໄດ້ ເຖິງມັນຈະສະໜຸກ ສະໜານພຽງໃດກໍຕາມ ແຕ່ສຸດທ້າຍມັນກໍທຳໃຫ້ ຊີວິດຈິດໃຈມີຄວາມທຸກທໍລະມານ*

ທີ່ບໍ່ມີວັນສິ້ນສຸດ ເພາະຊີວິດໂລກໆ ມັນຂຶ້ນໆ ລົງໆ ມີ ຄວາມປ່ຽນແປງ ທີ່ບໍ່ແນ່ນອນ ບາງຄັ້ງກໍສຸຂ ບາງຄັ້ງກໍທຸກ ຮັກໆ ຊັງໆ ດີໃຈ ເສຍໃຈ ສະດັບກັນໄປ ຕາມຄວາມປ່ຽນແປງ ຂອງສັງຂະຕະທັມ ວັດຖຸໃຫ້ຄວາມ ສຸຂແຕ່ພຽງພາຍນອກໄດ້ແຕ່ບໍ່ສາມາດ ໃຫ້ຄວາມສະຫງົບເຢືອກເຢັນ ແກ່ຈິຕໃຈໄດ້ ເພາະຈິຕໃຈບໍ່ໄດ້ເປັນອິດສະລະພາບຢ່າງແທ້ຈິງ ມີແຕ່ອາໃສເຫຍື່ອ ຫລືອາມິດທີ່ເປັນ (ອັດສາທະ) ສະເໜ່ ອັນຍົວະຍວນ ຂອງວັດຖຸ ອັນມີຮູບງາມໆ ສຽງມ່ວນໆ ກິ່ນຫອມໆ ລົດແຊບໆ ສຳຜັດອັນນິ້ມນວນ ເປັນເຄື່ອງຫລໍ່ລ້ຽງ ແລະສະຫນອງທາງ ຫູ ຕາ ດັງ ລີ້ນ ກາຍ ໃຈ ມີຄວາມສະໜຸກໄປວັນໆ ເທົ່ານັ້ນເອງ

ສະນັ້ນ ຊີວິດຈິຕໃຈທ່ານ ຈຶ່ງເກີດຄວາມເບື່ອຫນ່າຍຕໍ່ ໂລກີຍະວິສັຍ ທ່ານຈຶ່ງຫາ ໂອກາດເຂົ້າຫາ ພຣະພຸທທະສາສະນາສຶກສາພຣະທັມໄປນຳເພື່ອຜ່ອນຄາຍອາລົມ ຫລື ຄວາມທຸກ ທີ່ມີກມົ້ນໃນການມະຄຸນອັນແຜດເຜົາຈິຕໃຈໃຫ້ທຸກຮ້ອນ

ທ່ານພຣະອາຈາຣຍ໌ ເຄີຍເລົ່າ ໃຫ້ລູກສິດຟັງວ່າ ສະໃໝຕອນເປັນພະນັກງານ ເລຂາທູດນັ້ນ ເງິນເດືອນທີ່ໄດ້ຖ້າຊື້ທອງຄຳກໍໄດ້ 20ປາຍກ່ວາບາດຄຳພຸ້ນແຫລະ ສະຫນຸກໃຊ້ຈ່າຍ ສະຫນຸກຫລິ້ນກິນມ່ວນຊື່ນຕາມພາສາຄົນຫລົງໂລກ

ຊີວິດ ທາງໂລກນັ້ນເມື່ອພົບກັບບັນຫາ ກໍຫາທາງອອກບໍ່ໄດ້ ສຸດທ້າຍກໍຫາທາງອອກດ້ວຍການເອົາອະບາຍຍະມຸກ ມາເປັນເພື່ອນແກ້ກຸ້ມແກ້ທຸກໃຫ້ລືມມື້ລືມວັນ ເທົ່ານັ້ນເອງ ໃນໄລຍະນຶ່ງເພິ່ນກໍເຄີຍເອົາ ໄສຍະສາດມາເປັນທີ່ເພິ່ງ ພຣະພຸທທະຮູບອົງໃດສັກສິດ ເຄື່ອງຄ້ຳຂອງຄູນເພິ່ນກໍເຄີຍສະແຫວງຫາມາໄວ້ເພື່ອຂາບໄຫວ້ຂໍພອນ ໃຫ້ເພິ່ນມາຊ່ວຍແຕ່ສຸດທ້າຍກໍບໍ່ທຳໃຫ້ຊີວິດດີຂຶ້ນ ມີ

*ແຕ່ເສຍເງິນເສຍເວລາ ເສຍຄວາມຮູ້ສຶກທີ່ເປັນກຸສົນ ເຮັດໃຫ້ຈິດໃຈອ່ອນແອຫວັ່ນໄຫວ ບໍ່ເຂັ້ມແຂງ ເພິ່ນເຄີຍດຳລິ ໄວ້ວ່າສິ່ງດັ່ງກ່າວນັ້ນຄົງຈະບໍ່ເປັນທີ່ເພິ່ງແກ່ເຮົາໄດ້ຈິງ ແຕ່ທີ່ເພິ່ງອັນແທ້ຈິງຄືພຣະທັມນັ້ນເອງ ຖ້າເຮົາປະຕິບັດຕາມພຣະທັມ ແລະ ມີພຣະທັມຄຸ້ມຄອງ ກາຍວາຈາ ໃຈ ຊີວິດກໍພົບກັບຄວາມຈະເລີນກ້າວໜ້າໄດ້ແທ້ຈິງ*

**( ພາບຖ່າຍຈາກວັດດ່ານສູງ ເມືອງນາຊາຍທອງ )**



**" ຢາກເອົາຍິ່ງບໍ່ໄດ້ ຖ້າໃຫ້ຍິ່ງໄດ້ທັງໝົດ"**

*ດັ່ງນັ້ນເຮົາຈຶ່ງເຄີຍໄດ້ຍິນບົດເທສະນາຂອງທ່ານພຣະອາຈາຣຍ໌ເພິ່ນເນັ້ນໜັກໃຫ້ ແກ້ບັນຫາທຸກສິ່ງຢ່າງ ດ້ວຍຕົວເຮົາເອງ ຫລື ປິສສະນາທັມທີ່ຕິດຢູ່ຕົ້ນໄມ້ ໃນວັດຊຳປັກແຮດ ນັ້ນ ຫລືຫລັງພຣະ ພຸທທະຮູບຂ້າງສົມ ແລະ ເພິ່ນກໍຂຽນໄວ້ຢ່າງໜ້າສົນໃຈວ່າ:* ***" ລູກເອີຍຢ່າສົນໂພດປຸກເສກ ພໍ່ເລີຍພໍ່ເປັນ ພຸທທະເຈົ້າພໍ່ຕົ້ນຢູ່ ແລ້ວ ຈິ່ງປຸກລູກເອງນັ້ນເຖີດຄຸນຄ່າຂອງພໍ່ມັນບໍ່ສົມຄວນແກ່ການຊື້ຂາຍດ້ວຍເງິນ"***

ເພື່ອເປັນການຕັກເຕືອນແລະຊີ້ບັນຫາຕ່າງໆ ຢູ່ທີ່ໃຈເຮົາເອງ.

ທ່ານພຣະ ອາຈາຣຍ໌ ກໍເປັນຜູ້ນຶ່ງ ທີ່ໄດ້ໃກ້ຊິດ ກັບພຣະອາຈາຣຍ໌ປານ ອະນັນໂທ. ທ່ານພຣະອາຈາຣຍ໌ ເຄີຍເລົ່າໃຫ້ລູກສິດຟັງວ່າ.ທ່ານ ພຣະອາຈາຣຍ໌ ປານ ອະນັນໂທ ເປັນພຣະສົງ ອົງນຶ່ງທີ່ສຳຄັນທີ່ສຸດໃນສະໄໝນັ້ນ. ເພິ່ນມີຈະຣິຍາວັດອັນງົດງາມ. ມີຄວາມນອບນ້ອມຖ່ອມຕົນ ບໍ່ມີມານະທິຕຖິ ອວດອົ່ງທະນົງຕົນ ແລະ ເປັນນັກປຣາຊຂອງລາວໃນສະໄໝນັ້ນ.ທ່ານ ພຣະອາຈາຣຍ໌ ພູມ ກໍມີໂອກາດເຂົ້າໄປຮັບໃຊ້ ທ່ານເພາະທ່ານ ອາຈາຣຍ໌ ພູມ ມີລົດປະຈຳຕຳແໜ່ງ ເມື່ອໄປສະແດງທັມບ່ອນໃດ .ພຣະອາຈາຣຍ໌ ປານ ກໍໃຫ້ຄົນໄປເອີ້ນຖ້າບໍ່ມາເພິ່ນກໍໄປເອີ້ນເອງ ຫລັງຈາກກັບຈາກການສະແດງທັມແລ້ວ ທ່ານອາຈາຣຍ໌ ປານ ກໍຖາມອາຈາຣຍ໌ພູມວ່າ: ການສະແດງທັມນີ້ເປັນຢ່າງໃດ. ເຂົ້າໃຈພຽງໃດ. ເລີຍທຳໃຫ້ພຣະອາຈາຣຍ໌ ພູມ ເອົາໄປຄົ້ນຄິດເພື່ອມາຕອບ ການຢູ່ໃກ້ນັກປຣາຊບັນດິດ. ກໍທຳໃຫ້ເຮົາເປັນຄົນສະຫລາດ ໄປດ້ວຍ. ນີ້ກໍເປັນສັຈຈະທັມອີກຢ່າງນຶ່ງ.

ທ່ານ ອາຈາຣຍ໌ ພູມ ເປັນນັກຮຽນຮູ້ ນັກສຶກສາເປີດກວ້າງຫູ ຕາ ຕົວເອງ ໃຫ້ກ້າວໄກ. ທ່ານໄດ້ ຮຽນການເມືອງ ການປົກຄອງ ແລະ ປຣັຊະຍາຊີວິດ ທາງສາສະນາໄປພ້ອມ ເພື່ອເອົາມາແກ້ໄຂປັບປຸງ ຊີວິດໃຫ້ດີຂຶ້ນ ສະນັ້ນເຮົາຈຶ່ງ ໄດ້ເຫັນຕູ້ ໜັງສື ອາຈາຣຍ໌ ພູມ ຕອນເປັນ ຄາຣະວາດນັ້ນມີ ຈຳນວນ ຫລວງຫລາຍ ແລະ ມີຕາປະທັບ ຊຽນຊື່ (ທ້າວພູມເດຊວົງສາ) ໄປພ້ອມ.

ຖືວ່າ ພຣະອາຈາຣຍ໌ ພູມປູກພື້ນຖານ ທາງດ້ານພຸທທະທັມມາແຕ່ ເປັນຄາຣະວາດ ພຸ້ນ.

ນີ້ຄືວິຖີຊີວິດພາກ ສ່ວນນ້ອຍໆ ນຶ່ງ ໃນຄາວຍັງເປັນຄາຣະ

*ວາດທີ່ ພຣະອາຈາຣຍ໌ ໄດ້ ໃຊ້ຊີວິດຜ່ານມາ.*

## 6. ການເດີນເຂົ້າສູ່ຮົ່ມຜ້າກາສາວະພັດ ແລະ ການເຜີຍແຜ່ທັມ

*ຫລັງຈາກ ພຣະອາຈາຣຍ໌ ໄດ້ຜ່ານບົດຮຽນ ປຣັຊະຍາຊີວິດ ທາງໂລກທີ່ບໍ່ມີທາງຈົບຊິ້ນ ແລ້ວ ທ່ານກໍຫັນເຫເຂົ້າສູ່ຮົ່ມຜ້າກາສາວະພັດ ຄືເຂົ້າບວດໃນທາງ ພຸທທະສາສະນາເມື່ອວັນທີ່ 24\ 2 ປີ ຄ.ສ1985 ທີ່ວັດບ້ານ ບໍ່ໂອ ເມືອງຫາດຊາຍຟອງ ແຂວງກຳແພງນະຄອນ ໂດຍ ຍາທ່ານ ພຣະອາຈຣຍ໌ປ້ອງເປັນ ພຣະ ອຸປັຊຊາ*

*ທ່ານບວດຕອນແກ່ ອາຍຸປະມານ 53 ປີ. ຕອນເຂົ້າບວດທ່ານກໍເຄີຍ ເວົ້າກັບ ອຸປັຊຊາ ວ່າ. ຈະບວດຕະຫລອດຊີວິດ ຍາທ່ານກໍທັກທ້ວງວ່າ: ຢ່າກ່າວ ຢ່າງນັ້ນເລີຍ, ອາຕະມາເຄີຍເຫັນຄົນກ່າວເວົ້າຢ່າງນີ້ ແຕ່ ສຸດທ້າຍກໍໄປບໍ່ລອດ. ຕ້ອງສິກອອກໄປເປັນຄະລືຫັດເຫມືອນເດີມ*



ແຕ່ ພຣະອາຈາຣຍ໌ພູມ ກັບມີປະນິທານໃນໃຈວ່າຈະບວດຕະຫຼອດຊີວິດ ເພື່ອສະແຫວງຫາໂມກຂະທັມ ຕາມທີ່ໄດ້ສຶກສາມາ ເພິ່ນຮຽນພຣະປະຕິໂມກໃຊ້ເວລາ 7 ເດືອນຈຶ່ງຈົບ ແລະ ຮຽນສູດມົນພິທີອື່ນ ໆ ຫລາຍເດືອນຈຶ່ງຄ່ອຍຈົບ

ເພິ່ນເຄີຍເວົ້າວ່າ ການເຂົ້າມາບວດນັ້ນ ທາງລາດສະການກໍບໍ່ຄ່ອຍອະນຸຍາດ ໃຫ້ບວດ ເພາະທ່ານມີຄວາມຮູ້ມີຜົນງານໃນການຮັບໃຊ້ປະເທດຊາດບ້ານ ເມືອງ ແຕ່ເພິ່ນມີຄວາມມຸ້ງໝັ້ນຕັ້ງໃຈຢາກຮັບໃຊ້ສາສະນາ ເພື່ອເຜີຍແຜ່ພຸທທະທັມອອກສູ່ມວນຊົນ ກໍເລີຍຂໍອະນຸຍາດບວດປະ. 3 ເດືອນ ແລະຢູ່ມາເລື້ອຍໆ ຈົນຮອດບັ້ນສຸດທ້າຍຂອງຊີວິດ

ເມື່ອບວດເຂົ້າມາ ແລ້ວ ເພິ່ນກໍປະຕິບັດຕາມ ພຣະທັມ ແລະ ອອກເຜີຍແຜ່ ພຸທທະສາສະນາ ຕາມທີ່ຕັ້ງໃຈໄວ້ ແລ້ວໄດ້ປະຈໍາຢູ່ວັດບ້ານ ບໍ່ໂອ ເມືອງຫາດຊາຍຟອງ ໂດຍການແນະນໍາຂອງທ່ານ ມະຫາຄໍາຕັນເທບບົວລີ ( ສະໃໝຄາວຍັງເປັນປະທານ ອ.ພ.ສ ສູນກາງ ) ທ່ານເຜີຍແຜ່ທັມຢູ່ ທີ່ນັ້ນຈົນມີ ຊື່ສຽງໂດ່ງດັງທົ່ວໄປ ນັກຂ່າວ ຊາວຍີ່ປຸ່ນກໍ ໄປສໍາພາດຢູ່ທີ່ນັ້ນ

ນັກຂ່າວສໍາພາດວ່າ: ພຸທທະສາສະນາຈະໄປໄດ້ ຫລື ບໍ່ກັບ ລະບອບໃໝ່ນີ້.? ເພິ່ນຕອບວ່າ: ໄດ້ແນ່ນອນ ນັກຂ່າວຖາມຕໍ່ອີກວ່າ: ເປັນຫຍັງຈຶ່ງໄດ້.? ເພິ່ນຕອບວ່າ: ເພາະມັນເປັນສັຈຈະທັມຄວາມຈິງ ແລ້ວໃຜຊິບໍ່ມັກຂອງຈິງ ພຸທທະສາສະນາ ເປັນສັນທິຕຖິໂກ. ອະກາລິໂກ ເປັນສິ່ງທີ່ພິສູດໄດ້ເຫັນໄດ້ ດ້ວຍຕົນເອງ ເປັນສິ່ງທີ່ນ້ອມເຂົ້າມາສູ່ຈິດໃຈ ເປັນສາສະນາແຫ່ງ ເມດຕາ-ແຫ່ງປັນຍາ-ແຫ່ງສັນຕິພາບ-ສັນຕິສຸກ ມີເຫດຜົນໃນຕົວມັນເອງ

ຄຳຕອບດັ່ງກ່າວນີ້ ທຳໃຫ້ນັກຂ່າວຊາວຍີ່ປຸ່ນ ເກີດຄວາມປະທັບໃຈ ສົນໃຈ ຢາກທີ່ຈະສຶກສາ ພຸທທະສາສະນາຕໍ່ໄປ

ທ່ານ ພຣະອາຈາຣຍ໌ ບວດໄດ້ພຽງ ແຕ່ 2 ພັນສາເທົ່ານັ້ນ (ປີ. ຄ.ສ 1986- 1987) ເຂົາກໍ່ຍົກຍ້ອງໃຫ້ ເພິ່ນ ເປັນ ອາຈາຣຍ໌ ໃຫຍ່ ທາງດ້ານ ການເຜີຍແຜ່ ວິປັດສະນາກັມມະຖານ ຢູ່ຕໍ່ມາ ທ່ານ ອາຈາຣຍ໌ ຈຶ່ງມອບໃຫ້ ພຣະ ອາຈາຣຍ໌ ຊາລີ ກັນຕະສີໂລ .ເປັນປະທານການເຜີຍແຜ່ ເພາະເປັນ ພຣະມະຫາເຖຣະ ປະຈຳ .ອ.ພ.ສ ສູນກາງ - ແລະກໍໄດ້ທຳໜ້າທີ່ຮ່ວມກັນ ຕະຫລອດມາ

ທ່ານພຣະອາຈາຣຍ໌ ພູມ ເປັນຜູ້ຄິດເລີ້ມຕົ້ນ ການໄຫວ້ພຣະແປກ່ອນຫມູ່ໃນສະໃໝນັ້ນ ຕໍ່ມາຈຶ່ງຂະຫຍາຍ ຫລາຍຂຶ້ນ. ການໄຫວ້ພຣະແປນີ້ ທຳອິດກໍທຳໃຫ້ຄົນເຂົ້າໃຈຜິດ ແລະ ຕໍ່ຕ້ານ. ເມື່ອໄຫວ້ເລື້ອຍໆ ກໍທຳໃຫ້ຄົນເກີດຄວາມພໍໃຈ ແລະເຂົ້າໃຈມາເລື້ອຍໆ ເພາະມັນເປັນຄຳສອນຂອງ ພຣະພຸທທະເຈົ້າ ທີ່ເປັນສັຈຈະທັມແທ້ຈິງມາຕະຫລອດ. ສຸດທ້າຍຄົນທີ່ເຄີຍຕໍ່ຕ້ານການໄຫວ້ພຣະແປນີ້ ກໍມານັບຖື ແລະ ເປັນລູກສິດ ອາຈາຣຍ໌ ຕໍ່ໄປ. ທ່ານຢູ່ ວັດ ບໍ່ໂອ ກັບວັດໂພນປ່າເປົ້າ ສັບປ່ຽນໄປມາຫລາຍເດືອນ ເພື່ອໄປບັນລະຍາຍທັມ

ທ່ານ ຢູ່ໄດ້ໄລຍະນຶ່ງກໍຍ້າຍມາຢູ່ ວັດປ່າສ້າງໃຫມ່ທີ່ ວັດໂພສີ ບ້ານ ຫນອງແຫ້ວ ເມືອງຫາດຊາຍຟອງ ເຊັ່ນດຽວກັນ ໃນປີ 1986 ຕໍ່ມາເພິ່ນເອີ້ນວ່າ ສວນ ວັດທະນະທັມ ເຊິ່ງໃນ ປະຈຸບັນນີ້ເປັນວັດທ່ອງທ່ຽວ ຂອງກຳແພງນະຄອນ ແມ່ນພຣະອາຈາຣຍ໌ ປູ່ບົວທອງ ເປັນເຈົ້າອາວາດ ວັດແທນ

ທ່ານມາຢູ່ທີ່ນັ້ນ ກໍທຳໜ້າທີ່ຕາມທີ່ຕັ້ງໃຈໄວ້. ຄືການເຜີຍແຜ່ພຣະທັມ ຄຳສັ່ງສອນ ຂອງພຣະ ພຸທທະເຈົ້າ ທ່ານມາຢູ່ທີ່ນັ້ນ ທ່ານກໍ

ເລີຍຈັດງານ ປະຕິບັດ. ວິປັສສະນາກຳມະຖານຂຶ້ນ. ຄະນະວິປັສ ສະນາຈາຣຍ໌ ທຳໜ້າທີ່ໃຫ້ຄວາມຮູ້ ແລະ ອົບຮົມ ຕອນນັ້ນມີ ຫລາຍອົງເປັນຕົ້ນ.

ພຣະ ອາຈາຣຍ໌ ພູມ ເດຊວົງສາ ເປັນຫົວໜ້າ.

ພຣະ ອາຈາຣຍ໌ ປູ່ບົວທອງ

ພຣະ ອາຈາຣຍ໌ ປູ່ທ່ຽງ

ພຣະ ອາຈາຣຍ໌ ທອງເວີນ

ແມ່ຂາວຂັນທອງ ແມ່ຂາວອິນ ແລະອື່ນໆ

ພຣະອາຈາຣຍ໌ ພູມຈັດງານຂຶ້ນ. ໂດຍບໍ່ໄດ້ມີໃບຂ່າວ ມີແຕ່ບອກ ຂ່າວ ຍາດໂຍມຕໍ່ໆກັນໄປດ້ວຍວາຈາ ເທົ່ານັ້ນ ນອກຈາກນັ້ນ ພຣະສົງ ສຳມະເນນແມ່ຂາວ ຖາງປ່າເອງເພື່ອ ໄວ້ຕ້ອນຮັບຜູ້ມາ ສະແຫວງບຸນ

ທ່ານອາຈາຣຍ໌ ເຄີຍເວົ້າວ່າ ການຈັດງານປະຕິປັດທັມ ທຳອິດນັ້ນ ບໍ່ມີທືນຮອນ ບໍ່ມີຄົນມາຊ່ວຍ ມີແຕ່ກຳລັງໃຈໃນຄະ ນະນ້ອຍໆເທົ່ານັ້ນໄປຮ່ວມກັນ ເວລາຖາງປ່າ ແລະ ທຳຄວາມສະ ອາດໃນວັດກໍ່ ມີຄົນມາຕຳນິ ຕິຕຽນວ່າເປັນ ພຣະສົງບໍ່ຄວນເຮັດ ວຽກຢ່າງນັ້ນມັນຜິດ ວິນັຍ ທ່ານອາຈາຣຍ໌ກໍເວົ້າວ່າ ເລື່ອງຜິດມັນ ກໍຜິດນັ້ນແຫລະ ແຕ່ບໍ່ມີຄົນມາເຮັດຊ່ວຍແມ່ນໃຜຊິເຮັດຖ້າບໍ່ເຮັດ ເອງ ຕັດໄມ້ຖາງປ່າກໍ່ທຳເອງ ! ເຖິງມັນຈະຜິດວິນັຍກໍ່ຕາມແຕ່ປະ ໂຫຍດທີ່ໄດ້ມັນຄຸ້ມຄ່າ ຫລາຍກ່ວາຄວາມຜິດອັນນ້ອຍໆສຸດທ້າຍ ຜູ້ຕຳນິຕິຕຽນກໍ່ເຂົ້າໃຈ ແລະ ພໍໃຈໃນຄຳຕອບ ກໍ່ເລີຍເສຍສະລະ ເວລາມາເຮັດວຽກຊ່ວຍຈົນແລ້ວງານ

ທ່ານຈັດງານປະຕິບັດທັມນ້ອຍໆ ແຕ່ມີຄົນມາຮ່ວມ ປະ ຕິບັຕແລະອຸໂປໂມທະນາຫລາຍ ສຸດທ້າຍງານນ້ອຍໆກໍ່ກາຍເປັນ

ງານໃຫຍ່ ທ່ານກໍ່ເລີຍສວຍໂອກາດຈັດງານກູ້ກຽດສາສະນາ ຢູ່ປະເທດລາວໃຫ້ປະເທດເພື່ອນບ້ານໃຫ້ຮັບຮູ້ເຖິງບົດບາດພຣະສົງ ແລະ ສາສະນາ ໃນປະເທດລາວກ່ຽວກັບລະບອບໃໝ່ ວ່າມີຄວາມ ເປັນຫ່ວງເປັນໄຍ ແລະ ຜູກພັນກັບ ພຽງໃດ ກັບປະຊາຊົນຄົນລາວເຮົາ ທ່ານປິ່ນປາກທໍລະໂຄ່ງ ແລ້ວພາກັນເດີນຈົນກົມຕາມຮິມຝັ່ງແມ່ນໍ້າຂອງ ໂດສະນາສະແດງພຣະທັມມະເທສ ສະນາໄປພ້ອມ ມີພຣະສົງ ສາມະເນນ ແມ່ຂາວ ແມ່ຊີ ພໍ່ອອກ ແມ່ອອກ ຈຳນວນຫລວງຫລາຍ ພາກັນເດີນຈົນກົມຕາມຫລັງກັນໄປ ແລະ ບັງສຳມະທິ ຮ່ວມກັບປະຊາຊົນຄົນໄທ ພາກັນມາຢືນຕາມຮິມຝັ່ງແມ່ນໍ້າຂອງຈຳນວນ ຫລວງຫລາຍ ເພື່ອເບິ່ງພຣະສົງ ສາມະເນນ ແມ່ຂາວ ແມ່ຊີ ທີ່ຝັ່ງແມ່ນໍ້າຂອງທາງກຳແພງນະຄອນພື້ ດ້ວຍຄວາມຕື່ນຕະໜົກ ແລະ ສົນໃຈ

ການຈັດງານປະຕິບັດທັມ ຕອນນັ້ນ ເປັນການລິເລີ້ມ ແລະ ເປີດກ້ວາງຕໍ່ວົງການ ໃນການເຜີຍແຜ່ ວິປັສສະນາກັມມະຖານຂຶ້ນຕໍ່ແຕ່ນັ້ນ ກໍມີການຈັດງານປະຕິບັດທັມ ຂຶ້ນຫລາຍແຫ່ງໃນ ກຳແພງນະຄອນເປັນຕົ້ນແມ່ນວັດສ້າງເຫວີຍ- ໂສກປ່າຫລວງ-ວັດຕາດທອງ -ດ່ານສູງ ແລະອື່ນ ໆ ໂດຍແມ່ນ ມະຫາຄຳຕັນ ເທບບົວລີ ປະທານ ອ.ພ.ສ ສະໃໝນັ້ນ ແລະ ພຣະອາຈາຣຍ໌ ຊາລີ ກັນຕະສີໂລ ເປັນຜູ້ຊີ້ນຳພ້ອມໃຫ້ການສະນັບສະໜູນມາໂດຍຕະຫຼອດ

ທ່ານອາຈາຣຍ໌ ຢູ່ວັດສວນວັດທະນະທຳໄດ້ 2 ພັນສາຫລັງຈາກນັ້ນຈຶ່ງຍົກຍ້າຍ ເຂົ້າມາຢູ່ ວັດປ່າ ຊຳປັກແຮດ ໃນປີ ຄ.ສ 1988 ຈົນຮອດປີ ຄ.ສ 2008 ເປັນເວລາຍາວນານ ເຖິງ 22 ປີ ແລ້ວກໍມໍລະນະພາບ ລະສັງຂານ ຄືນສູ່ທັມມະຊາດທີ່ນີ້

ທ່ານເລົ່າໃຫ້ລູກສິດຟັງວ່າ: ອາຕະມາ ໄດ້ມາຢູ່ ວັດປ່າຊຳປັກແຮດ ທຳອິດນັ້ນ ມີພຣະມາຢູ່ກ່ອນເປັນພື້ນຖານທີ່ນີ້ 2-3 ອົງ ເປັນ

ວັດເກົ່າແກ່ ມີພື້ນຖານແຫ່ງຄວາມສະຫງົບຢູ່ແລ້ວເຫມາະສົມແກ່ຜູ້ສະແຫວງຫາໂມກຂະທັມຄວາມພົ້ນທຸກ ແລະເຜີຍແຜ່ພຣະທັມກໍງ່າຍເພາະມັນຢູ່ໃກ້ກັບສັງຄົມໃຫຍ່ ທ່ານມາຄົນດຽວ ຈ້າງລົດຂົນປຶ້ມ ມາຈຳນວນຫລວງຫລາຍ ແລະ ຂອງໃຊ້ສ່ວນໃດນຶ່ງເຊິ່ງເປັນອຸປະກອນການເຜີຍແຜ່ພຣະທັມ ມີເທບອັດກະແສັດ ແອມປາກອາໂຫລ ຮູບພາບປິດສະນາທັມ ຂົນມາເປັນ 2-3 ຄັນລົດພຸ້ນແຫລະ ໜັງສື ແລະ ອຸປະກອນຕ່າງໆ ຈຳນວນນັ້ນ ກໍເກັບໄວ້ຢູ່ກຸດຕິທ່ານເອງ (ສົນໃຈໄປເບິ່ງໄດ້) ທ່ານເປັນຄົນມັກອ່ານ - ຟັງ-ຄົ້ນຄົ້ວ **ທ່ານເປັນໝອນໜັງສືທັມມະຢູ່ 3 ປີ ແລະ ສຶກສາມາຕະຫລອດຊີວິດ** ດັ່ງນັ້ນທ່ານຈຶ່ງເປັນນັກປຣາຊ ບັນດິດຄົນນຶ່ງທີ່ມີປະສົບການ ທາງໂລກ ແລະ ທາງທັມ ທັງທິດສະດີ ແລະພາກປະຕິບັດ ອັນໜ້າເຄົາລົບນັບຖືຢ່າງຍິ່ງ ເປັນຕົວຢ່າງ ແກ່ຄົນລຸ້ນຫລັງ ທີ່ຕ້ອງການສະແຫວງຫາໂມກຂະທັມ ຫຼືສິ່ງສູງສຸດຂອງຊີວິດ ທີ່ມະນຸດເກີດມາຄວນໄດ້ຮັບຕໍ່ໄປ

ທ່ານເປັນຜູ້ຈະເລີນໄປດ້ວຍ ມະນຸສ ສົມບັດ ສະຫວັນສົມບັດ ນິພພານສົມບັດ. ແລະເປັນຜູ້ ໜັກແໜ້ນ ຕໍ່ໂລກກະທັມ ໄດ້ລາບ-ຍົດ-ສັນລະເສີນ-ສຸຂ ທ່ານກໍບໍ່ສະແດງການດີໃຈ ເກີນໄປຈົນເສຍຄວາມຊົງຕົວແລະຄວາມຮູ້ສຶກທີ່ເປັນກຸສົນ.ເຊື່ອມ.ລາບ-ຍົດ-ສັນລະເສີນ- ທ່ານກໍບໍ່ສະແດງອາການເສຍໃຈ ເຫງົາໃຈ ເສົ້າໃຈ. ອ່ອນແອຫວັ່ນໄຫວ. ທ່ານກໍຍັງປົກກະຕິ. ແລະ ທຳໜ້າທີ່ ປະກາດຫລັກທັມໃນສາສະນາຕະຫລອດໄປ ເຖິງຢ່າງໃດ ທ່ານກໍບໍ່ສະແດງອາການ ຂຶ້ນໆ ລົງໆ ຟູໆ ແຟບໆ ໃຫ້ລູກສິດເຫັນ. ທ່ານໜັກແໜ້ນ. ມີຮອຍຍິ້ມແຫ່ງຄວາມ ເມຕຕາປາດຖະນາດີ ຕໍ່ເພື່ອນມະນຸສ ສະເໝີມາ.



ພາບອາຈາຣຍ໌ ພູມ ເຂົ້ານະມັດສະການ ຫລວງພໍ່ ພຸທທະທາສ
ເຊິ່ງເປັນພຣະ ທີ່ທ່ານ ເຄົາລົບຢ່າງຍິ່ງ ທີ່ຊີ້ແສງສະຫວ່າງໃຫ້ທ່ານເຂົ້າຫາພຸທທະທັມ

*ທ່ານ ພຣະອາຈາຣຍ໌ ທຳໜ້າທີ່ ເຜີຍແຜ່ ພຣະທັມຕາມແນວທາງທີ່ໄດ້ສຶກສາ ແລະ ປະຕິບັດມາ ເປັນເວລາຫລາຍປີ. ທັມມະເທສະນາ ຂອງພຣະອາຈາຣຍ໌ ເປັນບົດເທສະນາທີ່ຕຶງ ແລະ ທວນກະແສແຫ່ງຈິຕໃຈ ຂອງຜູ້ເຊື່ອຖື ໄສຍະສາດ .ແລະ ມີຄວາມງົມງວາຍເປັນພື້ນຖານ ເວລາເທສະນາ ທ່ານຈະເວົ້າກົງ ແລະ ຕຳກິເລສຂອງຄົນ. ດັ່ງນັ້ນຈຶ່ງເປັນທີ່ຕໍ່ຕ້ານ ຂອງກຸ່ມຄົນບາງກຸ່ມ. ແຕ່ອາຈາຣຍ໌ ກໍບໍ່ໄດ້ຫວັ່ນໄຫວ ແລະ ທຳໜ້າທີ່ເທສະນາຕໍ່ໄປເລື້ອຍໆ ເຖິງຈະມີຍາຕໂຍມ ສັດທາເຫລື້ອມໃສ ຫຼືບໍ່ເຫຼື້ອມໃສກໍຕາມ. ຂໍພຽງແຕ່ໄດ້ປະກາດຄວາມຈິງ ອັນເປັນກຸສົລະທັມເພື່ອປະໂຫຍດອັນກ້ວາງໄກ ແລະ ເປັນປະຕູພຣະ ນິພພານ ອັນໃກ້ ໆ ນີ້*

**(ທ່ານເຄີຍເທສະນາວ່າ.ສະຫວັນຢູ່ໃນອິກນາຣີກຢູ່ໃນໃຈ . ນິພພານຢູ່ໃກ້ໆ ຫາຍໃຈກໍໄດ້ຍິນ)** ສະນັ້ນທ່ານຈຶ່ງເທສະນາເລື່ອງນີ້ ເລື້ອຍໆ. ແຕ່ທ່ານຈະມຸ່ງໝັ້ນ.ໃນຄວາມໝາຍ ພາສາທັມ ຄື ພາສາຈິດໃຈຫລາຍກວ່າ.

ທ່ານພຣະອາຈາຣຍ໌ເຄີຍເວົ້າກັບ ລູກສິດເລື້ອຍໆວ່າ ການສອນຄົນໃຫ້ມີ ສັມມາທິຕຖິ ( **ຄວາມເຫັນຊອບທັມ** ) ນີ້ມັນຍາກ. ຖ້າເພີຍແຜ່ໄດ້ ປີລະ1ຄົນຫາ 2ຄົນຖືວ່າ ໄດ້ກຳໄລຫລາຍ. ບົດເທສະນາທີ່ທຳໃຫ້ຄົນແຕກຕື່ນ ວິພາກ ວິຈານຫລາຍ ແມ່ນເລື່ອງບຸນທີ່ແທ້ແກ້ໄດ້ທຸກບັນຫາ ເພິ່ນກ່າວໄວ້ວ່າ: **(ທຳບຸນບໍ່ເອົາບຸນ ນັ້ນແຫລະຄືບຸນອັນແທ້ຈິງ)** ແຕ່ທ່ານອາຈາຣຍ໌ເນັ້ນໜັກພາສາ ຈິດໃຈ ຄືທຳບຸນ ຫຼື ທຳຄວາມດີ ເພື່ອເສຍສະລະນັ້ນແຫລະ ຄືບຸນຫລືຄວາມດີອັນແທ້ຈິງ ແຕ່ຄົນບໍ່ເຂົ້າໃຈ ໄປຫວັງຜົນເປັນວັດຖຸເລີຍທຳໃຫ້ເກີດຄວາມຂັດແຍ້ງຂຶ້ນມາ. ເພາະເລື່ອງບຸນເປັນເລື່ອງນາມພຣະທັມ.ເຄື່ອງລ້າງບາບທຳໃຫ້ໃຈສະອາດ ແລະ ດັບທຸກໄດ້

ທ່ານອາຈາຣຍ໌ ມາຢູ່ຊຳປັກແຮດ ປະມານປີ1997. ທ່ານກໍຈັດງານ ເທສະນາທັມປະຈຳວັນອາທິດຂຶ້ນ ເປັນທາງການ.ແລະ ຈັດງານບຸນວິສາຂະບູຊາ ເດືອນ 6ເພັງ . ອົດອາຫານໜຶ່ງວັນຂຶ້ນໃນມື້ 15 ຄ່ຳ ກົງກັບປີ 1999 . ແລະ ພາລູກສິດປະຕິບັດທັມມາຕະຫລອດ . ໂດຍບໍ່ຂາດ. ບໍ່ເຫັນແກ່ຄວາມອິດເມື່ອຍ ແລະ ກຽດຄ້ານ .ເຖິງຈະເຈັບປ່ວຍ ແຕ່ກໍໃຫ້ລູກສິດ ປະບັດຕາມອຸດົມການສະເຫມີມາ

ຕື່ນເຊົ້າປະມານ 3ໂມງ. ແລະຕອນແລງ 4ໂມງ ທ່ານ ອາຈາຣຍ໌ຈະໃຫ້ຈົວນ້ອຍຕີຄ້ອງ ແລະກະແລ່ງ. ລົງໄຫວ້ພຣະ ສູດມົນ.

ທຸກວັນບໍ່ໄດ້ຂາດນອກຈາກນັ້ນກໍ່ຟັງເທສະນາຈາກ ທ່ານອາຈາຣຍ໌ ນຶ່ງຊົ່ວໂມງທຸກເຊົ້າຈົນຮອດ 5ໂມງ ຕອນແລງ ແມ່ນອາຈາຣຍ໌ ອະນຸຍາດໃຫ້ລູກສິດເທສະນາແທນ.ສັບປ່ຽນກັນ ແຕ່ລະວັນບໍ່ໄດ້ຂາດ ໃນກາງພັນສາທ່ານຈະສອນປະຣິຍັຕຕິທັມ ໃຫ້ລູກສິດພາຍໃນ ວັດຊຳປັກແຮດ ອອກພັນສາແລ້ວ ທ່ານຈະອອກເຜີຍແຜ່ທັມ ໃນທີ່ທົ່ວໄປ ຕາມແຕ່ສັທທາ ທີ່ມີຄົນມານິມົນ.

ການເຮັດບຸນກັມມະຖານ ແຕ່ກ່ອນເຮັດສາຍດຽວແຕ່ກໍ່ບໍ່ພຽງພໍກັບຄວາມຕ້ອງການຂອງຜູ້ສະແຫວງບຸນ ຕໍ່ມາຈຶ່ງແບ່ງເປັນ 3ສາຍ **ສາຍທີ 1** ແມ່ນພຣະອາຈາຣຍ໌ ພູມ **ສາຍທີ 2** ແມ່ນພຣະອາຈາຣຍ໌ ລັ່ງ **ສາຍທີ 3** ແມ່ນພຣະອາຈາຣຍ໌ ບຸນລ້ຽງ ກະຕະປຸນໂຍໂດຍແມ່ນພຣະ ອາຈາຣຍ໌ ຊາລີ ກັນຕະສີໂລ ເປັນຜູ້ຊີ້ນຳ

ການໄຫວ້ ພຣະແປນີ້ ອາຈາຣຍ໌ ໃຫ້ຄວາມສຳຄັນຫລາຍທີ່ສຸດ. ເພາະເປັນວິທີນຶ່ງໃນການເຂົ້າເຖີງ ພຣະທັມ. ທ່ານເປັນອົງທຳອິດທີ່ນຳພາພຣະສົງ ສຳມະເນນ. ອອກຕົນຍາດໂຍມທົ່ວໄປ ພາກັນປະຕິບັຕທັມ ກັມມະຖານ ແລະ ໄຫວ້ພຣະ ສາທະຍາຍພຣະທັມແປ ທ່ານເທສະນາສັ່ງສອນລູກສິດບໍ່ເຫັນແກ່ລາບສັກກາລະ ສັນລະເສີນເຍີນຍໍ ແລະ ຄວາມອິດເມື່ອຍອ່ອນລ້າ ດັ່ງນັ້ນທ່ານຈຶ່ງມີຄົນເຄົາຣົບນັ້ບຖື ມີກັນລະຍານະມິຕ ແລະ ລູກສິດຈຳນວນຫລວງຫລາຍ ເຊິ່ງຢັ່ງຍາຍທົ່ວໄປໃນທຸກແຂວງທົ່ວປະເທດ ແລະ ນອກປະເທດເພາະເຄີຍເຫັນຄົນລາວທີ່ໄປຢູ່ຕ່າງປະເທດນັ້ນ ໄດ້ເອົາກະແຊັດທັມມະທີ່ທ່ານອາຈາຣຍ໌ເທສໄວ້ໄປຟັງ ເຫັນວ່າເຂົ້າໃຈ ແລະ ແກ້ໄຂບັນຫາຊີວິດໄດ້

ພຣະອາຈາຣຍ໌ ພູມ ມາຢູ່ວັດປ່າຊຳປັກແຮດ ທຳອິດກໍ່ມີ

ບັນຫາເລື່ອງມິດສາທິຕຖິຂອງຄົນທີ່ມີ ກິເລສ ຕັນຫາຄອບງຳ ແລະ ມີຄວາມເຊື່ອໄສຍະສາດ ເປັນພື້ນຖານ ຈຶ່ງມອງທ່ານໃນແງ່ຮ້າຍ ບາງຄົນກໍ່ວ່າ ເພິ່ນເປັນພວກເດຍລັດຖີອື່ນ ຈິຕວິປະລາດ ເພາະສັ່ງສອນບໍ່ເໝືອນຄົນທົ່ວໄປ ເພາະຄຳເວົ້າທວນກະແສຈິຕໃຈປຸຖຸຊົນ ບາງຄັ້ງກໍ່ມີຄົນມາບວດນຳ ເພື່ອສືບສອດແນມພຶດຕິກັມ ແຕ່ສຸດທ້າຍດ້ວຍນ້ຳໃຈເສຍສະລະ ເປັນຄົນມີອຸດົມການອັນໜັກແໜ້ນ ບໍ່ຫວັ່ນໄຫວຕໍ່ສຽງຂອງກິເລສ ດ້ວຍຄຳ ວິພາກ ວິຈາຣ ຂອງຄົນ ທີ່ຢູ່ໃນໂລກມະນຸດ ອັນເພີດເພີນ ແລະ ເມົາແຕ່ຄວາມສະໜຸກ ທ່ານທຳທຸກຢ່າງໃຫ້ຄົນເຂົ້າຫາສາສະນາອັນແທ້ຈິງ ບໍ່ໄປເພິ່ງສິ່ງພາຍນອກ ບໍ່ເຫັນແກ່ປະໂຫຍດສ່ວນຕົວ ທ່ານມີອຸດົມການຢ່າງນີ້ ເລີຍທຳໃຫ້ຄົນເຂົ້າໃຈ ເຫັນອົກ ເຫັນໃຈ ສຸດທ້າຍສັດຕູກໍ່ກາຍມາເປັນມິຕຕະພາບ



**ຄະນະວິປັສສະນາຈາຣຍ໌.ອ.ພ.ສ ສູນກາງ ທີ່ວັດຖ້ຳລີສີ ຄ.ສ 1997 ຈາກຊ້າຍ ຈາຣຍ໌ ບຸນລຽງ ຈາຣຍ໌ ພູມ ຍາທ່ານ ກາວ. ຍາທ່ານ ຊາລີ ຈາຣຍ໌ລັ່ງ ຈາຣຍ໌ທອງເວີນ**

ໃນປີ1999 ກໍ່ມີນັກປຣັຊະຍາ ອ໋ອດສະເຕເລຍ ສອງຜົວເມຍ ມາສຳພາດທ່ານ ເປັນເວລາ 2-3 ຊົ່ວໂມງ. ມີພຣະອາຈາຣຍ໌ທົງວິໄລ ໂພທິຍານ ແລະ ພຣະອາຈາຣຍ໌ ປູ່ ໂພເງິນ ເຂົ້າຮ່ວມຮັບຟັງນຳ ເຂົາ ສຳພາດເລື້ອງປະຫວັດສ່ວນຕົວ ການສຶກສາຮ່ຳຮຽນ ພ້ອມຜົນງານ ແລະການເຜີຍແຜ່ສາສະນາ ຂອງເພິ່ນແຕ່ບໍ່ໄດ້ຖາມເລື້ອງການເທສະ ນາຂອງທ່ານວ່າ ທ່ານສອນຢ່າງໃດ .

ຫລັງຈາກເຂົາສຳພາດທ່ານແລ້ວ ເຂົາວ່າຈະໄປສຳພາດນັກ ເຜີຍແຜ່ ຢູ່ປະເທດກຳປູເຈຍ ຕໍ່ໄປອີກ **<< ທ່ານອາຈາຣຍ໌ ພູມປະຣິບ ວ່າ ຊາວຕະເວັນຕົກຮຽນພຸທທະສາສະນາ ແບບປຣັຊະຍາ ຄືການ ຄຳນຶງຄຳນວນດ້ວຍເຫດຜົນ ມັນກໍເລີຍບໍ່ສາມາດທີ່ຈະເຂົ້າເຖິງພຣະ ທັມ ແລະ ດັບຄວາມທຸກ ຢູ່ໃນຈິຕໃຈໄດ້ >>**

ນັກຂ່າວວິທະຍຸ ແລະ ໂທລະພາບກໍເຄີຍມາສຳພາດ ທ່ານອາ ຈາຣຍ໌ ຢູ່ເລື້ອຍໆ ທ່ານມີການສຶກສາ ແລະ ມີປະສົບການມາຫລາຍ ກໍສາມາດຕອບບັນຫາໄດ້ໂດຍບໍ່ຕ້ອງ ສົງໃສ. ໃນປີ 2001 ເປັນມື້ເປີດ ຫໍວັດທະນະທັມ ແຫ່ງຊາດ ທ່ານກໍໄດ້ຮັບນິມົນ ຈາກຄະນະ ຫໍວັດທະ ນະທັມ.ໃຫ້ໄປປະຖະຄາຖາ.ຫລື ບັນລະຍາຍ ກ່ຽວກັບ.ວັດທະນະທັມ ບູຮານລາວ ທ່ານບັນລະຍາຍ ເທື່ອນັ້ນ ທຳໃຫ້ນັກປະພັນ ນັກສຶກສາ ປັນຍາຊົນ. ເກີດຄວາມຕື່ນເຕັ້ນ ແລະ ສົນໃຈບໍ່ຄາດຄິດວ່າທ່ານຈະ ອະທິບາຍຢ່າງນີ້.ເພາະອະທິບາຍ ເປັນພາສາຈິຕໃຈ.ແລະເປັນຄວາມ ໝາຍ ທາງໂລກຸຕະລະທັມ **ເປັນຕົ້ນເລື້ອງ ສັງສິນໄຊ** ທ່ານໝາຍເຖິງ **ສິລ ສຳມະທິ ແລະ ປັນຍາ;ຈຳປາ 4 ຕົ້ນກໍຄື ສະຕິປັດຖານ 4 ນັ້ນເອງ. ເລື້ອງ ສຽວສະຫວາດ ກໍກ່ຽວກັບປັນຍາສຸດຍອດຄື ປັນຍາໂລກຸຕະລະ ທັມ ເຊັ່ນເວົ້າວ່າ ( ກິດລິດສັ້ນສັງມາຍາວຍອດຍິ່ງ ຍາວຍິ່ງສຽງສັງມາ**

ສັ້ນງ່າຍດາຍໃຜຮູ້ໄດ້ ເວົ້າສູ່ກັນຟັງ ເທວະດາອິນພົມຊີຍິກມືຍໍຍ້ອງ ) ທ່ານອະທິບາຍວ່າ ກິເລສນັ້ນມີນ້ອຍແຕ່ຄົນ ໄປປຸງແຕ່ງໃຫ້ມັນຫຼາຍ ໃຫ້ມັນຍາວຈົນບໍ່ມີທີ່ສິ້ນສຸດ ສ່ວນນິພພານກໍ່ຢູ່ໃກ້ໆ ແຕ່ຄົນເອົາໄປໄວ້ໄກ ຈົນບໍ່ຮູ້ວ່າມັນຢູ່ໃສ ມັນກໍ່ເລີຍກາຍເປັນເລື່ອງຍາວຫລາຍພົບ-ຊາຕ ມີນັກຮຽນຮູ້ ປັນຍາຊົນ ພາກັນສົນໃຈ ມາຖາມບັນຫາເຖິງວັດ.

## 7. ກ່ຽວກັບຊີວິດ ສ່ວນຕົວຂອງທ່ານ

ທ່ານເປັນຄົນຮັກສັດ ແລະປ່າໄມ້ ເຊັ່ນໝາແລະແມວເພາະມັນສອນທັມມະໄດ້ດີ ເວລາໄດ້ອາຫານ ທ່ານມັກເອີ້ນຫາໝານັກໂທນນັກຂາວແລະ ນັກພານ.ເພື່ອເອົາອາຫານໃຫ້ມັນກິນ. ເພິ່ນຄົງຈະໃສ່ຊື່ເປັນຄວາມໝາຍທາງທັມມະ ຫລາຍກ່ວາ . **ຄໍາວ່າໂທນ** ໝາຍເຖິງນຶ່ງ ຄໍາວ່ານຶ່ງບໍ່ມີສອງ ກໍແມ່ນນິພພານນັ້ນເອງ ເພາະນິພພານມີນຶ່ງ ພຸທທະກໍມີນຶ່ງເຊັ່ນກັນ **ຄໍາວ່າຂາວ** ໝາຍເຖິງ ບຸນຫຼື ກຸສົນ ຫຼື ຄວາມສະອາດ ສະວ່າງ ສະຫງົບ **ຄໍາວ່າພານ** ໝາຍເຖິງ ຄົນພານ ຫລື ສິ່ງທີ່ເປັນອັນທະພານ ເຊິ່ງຫມາຍເຖິງກິເລສຄວາມໂລບ-ໂກດ- ຫລົງ ມານະທິຕຖິ ເຍີະຍິ່ງຈອງຫອງຢູ່ ໃນໃຈຄົນເຮົານີ້ເອງດັ່ງນັ້ນ ກິເລສກັບ ທັມມະຈຶ່ງຢູ່ຄົນລະຝ່າຍຖ້າ ກິເລສດັບໝົດຊີວິດກໍເຢັນເປັນນິພພານ

ກ່ຽວກັບໂລກະທັມທັງ8 ຢ່າງນັ້ນ.ທ່ານບໍ່ຄ່ອຍສົນໃຈ.ລາບຍົດສັນລະເສີນ ຍໍຍ້ອງ. ແລະຄໍາວິພາກ ວິຈານຕ່າງໆນາໆ. ເພາະຄົນຢູ່ໃນໂລກທີ່ ກິເລສ ຕັນຫາ ຄອບງໍາ ຍ່ອມມອງເບິ່ງທຸກສິ່ງຢ່າງຕາມຄວາມຊອບໃຈພໍໃຈ ຂອງກິເລສຕົນເອງ **ທ່ານອາຈານ** **ເວົ້າວ່າ** ເຮົາຢູ່ໃນໂລກ ມີຄົນສາມປະເພດ ທີ່ກ່ຽວຂ້ອງກັບເຮົາ

1. ຄົນຮັກ ແລະ ຕໍ່ຕ້ານການກະທຳຂອງເຮົາ 2. ຄົນຊິງຊັງ ແລະ ບໍ່ພໍໃຈຕໍ່ເຮົາ 3. ຄົນບໍ່ສົນໃຈຕໍ່ເຮົາເລີຍ ເຮົາຢູ່ໃນໂລກຍ່ອມມີຄົນ 3 ປະເພດນີ້ ຢ່າງຫລີກລ່ຽງບໍ່ໄດ້

ດັ່ງນັ້ນພວກເຮົາ ຈຶ່ງທຳຕົວໃຫ້ດີທີ່ສຸດ **ບໍ່ຖອຍ.ບໍ່ສູ້.ບໍ່ຢູ່.ບໍ່ໜີ** ບໍ່ເອົາໃຈໃຜ; ແຕ່ເອົາໃຈ ພຣະທັມ.ທຳຕາມກົດເກນທັມມະຊາດ

ບາງຄັ້ງເມື່ອມີບັນຫາເກີດຂຶ້ນທ່ານກໍຢູ່ແບບ ວ່າງໆແລະປ່ອຍວາງເໝືອນບໍ່ມີຫຍັງເກີດຂຶ້ນ. **ທ່ານພຣະອາຈາຣຍ໌ ເຄີຍເວົ້າວ່າ** ທຸກສິ່ງຢ່າງເກີດຂຶ້ນ ສຸດທ້າຍກໍດັບໝົດ. ກັບຄືນສູ່ຄວາມປົກກະຕິເໝືອນເດີມ

ທຸກເຊົ້າແລງ 3 ຫຼື 4 ໂມງ.ທ່ານຈະຂຶ້ນໄປລໍຖ້າກ່ອນລູກສິດ. ເພື່ອ ມາໄຫວ້ພຣະສາທະຍາຍພຣະທັມ ແທນທີ່ຈະໃຫ້ລູກສິດໄປລໍຖ້າ. ທ່ານປະຕິບັດຢ່າງນີ້ມາຕະຫຼອດ ເຊິ່ງສະແດງໃຫ້ເຫັນເຖິງຄວາມຈິງໃຈ.ໜັກແໜ້ນຂອງທ່ານ ຕໍ່ໜ້າທີ່ສະເໝີຕົ້ນ ສະເໝີປາຍ.

## 8.ພຸທະທັມ ກ່ຽວກັບລູກສິດທ່ານ.

ເມື່ອລູກສິດມີບັນຫາ ຈະໄປຫາຄຳຕອບຈາກທ່ານ ທ່ານຈະຕອບ ບັນຫານອັຍໆບໍ່ຫລາຍແຕ່ກິນໃຈປະທັບໃຈດີ ເປັນຕົ້ນເຮົາເອງມີຄວາມທໍ້ແທ້ ທໍ້ຖອຍ ຕໍ່ການປະຕິບັດທັມເພິ່ນຈະເວົ້າວ່າມັນເປັນທຳມະດາຂອງຈິຕໃຈມັນເກີດ ໆ ດັບ ໆ ຢູ່ຢ່າງນີ້ ສຸດທ້າຍມັນກໍໝົດໄປເອງ ແຕ່ເຮົາຢ່າທໍ້ຖອຍໃນການຮຽນຮູ້ສຶກສາ ແລະ ເດີນໜ້າໄປສູ່ບົດຮຽນອັນຊີງຄຸນຄ່າ ຍິ່ງມີບັນຫາ ແລະ ອຸປະສັກ ຍິ່ງໄດ້ຄວາມຮູ້ ແລະ ບົດຮຽນ ເພື່ອທົດສອບຄວາມເຂັ້ມແຂງ. ວ່າເຮົາຈະຜ່ານຜ່າບົດຮຽນທີ່ເປັນຄວາມຈິງໄດ້ຢ່າງໃດ. ຢ່າງທີ່ນັກປຣາຊ ກ່າວໄວ້ວ່າ

**<< ມານບໍ່ມີປາລະມີບໍ່ເກີດ ມານບໍ່ມີປາລະມີບໍ່ແກ່ກ້າ ມານນັ້ນແລະ ເປັນຄູ. ອຸບປະສັກ ຄືອຸບປະກອນ ທີ່ເຮົາຈະຕ້ອງໃຊ້ເພື່ອຜ່ານຜ່າ ບັນຫານ້ອຍໃຫຍ່ >>** ບາງຄັ້ງມີລູກສິດຄົນນຶ່ງໄປປຶກສາ ຢາກຈະຮຽນປະຣິຍັດຕິທັມໃຫ້ສູງໆຂຶ້ນ ຈົນຈົບນັກທັມ ແລະ ປະລິນຍາພຸ້ນແຫລະ ທ່ານເວົ້າວ່າ ປະຣິຍັດທີ່ທ່ານສຶກສາມານັ້ນມັນພໍແລ້ວ ແຕ່ທ່ານຍັງບໍ່ສາມາດ ໄດ້ຮັບຣົສພຣະທັມທີ່ກິນໃຈ ປະທັບໃຈ ຖ້າທ່ານໄດ້ຮັບຣົສພຣະທັມທີ່ປະທັບໃຈກໍສາມາດດັບທຸກໄດ້ ການຮຽນນັ້ນມັນບໍ່ສິ້ນສຸດຈັກເທື່ອດອກ! **( ຮູ້ມາກຍາກນານ ຮູ້ນ້ອຍລຳຄານ ບໍ່ຮູ້ຈັກດີເປັນໜີ້ເທົ່າຕາຍ)** ບາງຄົນຈົບປະລິນຍາມາ ກໍຍັງມາຜ່າຍແພ້ຕໍ່ອະບາຍຍະມຸກ ແລະ ສິ່ງເສບຕິດທັງຫລາຍ ເຖິງຈະຮຽນສູງ ແຕ່ຈິດໃຈຍັງຕົກເປັນທາດ ກິເລສ ຕັນຫາ ບໍ່ສາມາດໄດ້ຮັບຄວາມສຸຂ ສະຫງົບເຢັນໄດ້ ຢ່າງສຽວສະຫວາດກ່າວໄວ້ວ່າ **<< ອັດສະຈັນໃຈແຂ້ຫາງຍາວໆ ບໍ່ໄດ້ຮອງນັ່ງ ບາດກະຕ່າຍຫາງແປງ ກະແຕຫາງກ້ອມໆ ສັງມາໄດ້ນັ່ງຮອງ >>** ເຊິ່ງປຽບໄດ້ກັບຄົນຮຽນສູງ ແຕ່ບໍ່ໄດ້ຢູ່ສະບາຍ ສ່ວນພວກຮຽນນ້ອຍໆ ແຕ່ອົດທົນຂະຫຍັ້ນນອບນ້ອມຖ່ອມຕົນປະຕິບັດສະເໝີຕົ້ນສະເໝີປາຍ ກໍສາມາດຢູ່ເຢັນເປັນສຸກໄດ້ ປຽບໄດ້ກັບກະຕ່າຍ ແລະກະແຕ ຫາງກ້ອມໆພັດໄດ້ນັ່ງຮອງ ທ່ານເວົ້າວ່າຮຽນທັມມະນັ້ນ ບໍ່ຕ້ອງຮຽນໄກໃຫ້ຮຽນຢູ່ ທີ່ ຫູ ຕາ ດັງ ລີ້ນ ກາຍ ໃຈ ນີ້ແຫລະທຸກເກີດຢ່າງໃດ ແລະ ຈະດັບທຸກຢ່າງໃດ ຖ້າດັບຄວາມປຸງແຕ່ງທາງດ້ານຈິດໃຈໄດ້ ການຮຽນພຸທທະສາສະນາ ກໍສິ້ນສຸດຢູ່ທີ່ນັ້ນ

ທ່ານເປີດໂອກາດ ໃຫ້ທຸກຄົນສຶກສາ ພຣະທັມ ຕາມອັດ

ທະຍາໃສ ເພາະຄົນສາມາດ ເຂົ້າເຖິງພຣະທັມ ໄດ້ດ້ວຍ 5 ວິທີຄື:

1. ການສາທະຍາຍພຣະທັມ

2. ການຟັງທັມຈາກຜູ້ຮູ້ທັງຫລາຍ

3. ການສົນທະນາທັມ ຫລື ການສະແດງທັມ

4. ການພິຈາລະນາທັມ

5. ການພາວະນາທັມ

ຄົນເຮົາກໍມີບາງ ຈິດຕັງຄື ຈິດໃຈຄົນ ຢູ່ໃນໂລກບໍ່ເໝືອນກັນ ບາງຄົນກໍຈິດຮຸນແຮງໄປ ທາງໂລພະຈະລິດ ຄືຄວາມໂລບ- ຮຸນແຮງໄປທາງໂທສະຈະລິດຄື ຄວາມໂກດແຄ້ນ- ຮຸນແຮງໄປ ທາງສັທທາຈະລິດ ເປັນຄົນເຊື່ອງ່າຍ- ຮຸນແຮງໄປທາງ ຣາຄະຈະລິດຄື ຮັກສວຍຮັກງາມ- ຮຸນແຮງໄປ ທາງພຸທທະຈະລິດຄື ເປັນຄົນມີປັນຍາ ... ນີ້ຄືລັກສະນະຈິດໃຈຂອງຄົນຢູ່ໃນໂລກ

ເມື່ອເຖິງຄາວເພິ່ນສະແດງທັມ ເພິ່ນຈະເທສກິງຂຸດຂຸ້ຍເອົາ ກິເລສ ອອກ ບໍ່ອ້ອມຄ້ອມໃຫ້ປ່ວຍການຖ້າພວກເຮົາບໍ່ຖາກໄມ້ແຮງກໍບໍ່ສາມາດ ນຳແກ່ນໄມ້ ມາເຮັດເຮືອນຢູ່ໄດ້ ດັ່ງນັ້ນຄົນຈຶ່ງວິພາກ ວິຈານວ່າ ທ່ານເທສະນາຫວັງເອົາແຕ່ແກ່ນໄມ້ຢ່າງດຽວບໍ່ຄ່ອຍສົນນຳເປືອກໄມ້- ໃບໄມ້-ງ່າໄມ້ແລ້ວລຳຕົ້ນຈະຢູ່ໄດ້ຢ່າງໃດ ເຂົາກ່າວວ່າ ຢ່າງນັ້ນແຕ່ທ່ານອາຈາຣຍ໌ ບໍ່ໄດ້ມີຈຸດມຸ້ງໝາຍຢ່າງນັ້ນ ທ່ານປາດຖະນາດີຕໍ່ທຸກຄົນ ແຕ່ທ່ານຫາກສະແດງທັມ ກົງແລະຕຳກິເລສ ຕົນຫາຂອງຄົນຕ່າງຫາກ ທ່ານບອກວ່າ ໃຫ້ລົດລະ ແລ້ວທ່ານຈະລວຍ ຖ້າເອົາແລ້ວມັນຈະຊວຍ **(ລະລວຍເອົາແລ້ວຊວຍ )** ຄືລະຄວາມເຫັນແກ່ຕົວຖ້າຫວັງເອົາໜ້າຕາ ຊື່ສຽງ ກຽດຕິຍົດ ແລ້ວ ມັນກໍຊວຍເລື້ອຍໆ ໄປ **( ເພາະທຳງານເຫັນແກ່ໜ້າຈະເກີດບັນຫາເລື້ອຍໄປ ທຳ**

**ຕົວເຫັນແກ່ໄດ້ ຢ່າຫວັງນ້ຳໃຈຈາກເພື່ອນຝູງ )** ທ່ານອາຈາຣຍ໌ປາຣິບວ່າ ບຸນທີ່ລ້າງບາບໄດ້ນັ້ນ ແມ່ນບຸນທີ່ເສຍສະລະ ບໍ່ຫວັງຜົນຕອບແທນ. ເພາະຫວັງຫລາຍຍິ່ງໄດ້ ຮັບຄວາມຜິດຫວັງຫລາຍ. ຄວາມດີງາມກໍເຊັ່ນດຽວກັນ ຖ້າຫວັງຜົນຈະບໍ່ເປັນຄວາມດີອັນແທ້ຈິງ. ແຕ່ເປັນການແລກປ່ຽນ ເພື່ອຫວັງຜົນກຳໄລເປັນການຂາດນ້ຳໃຈທີ່ຕ້ອງການເສຍສະລະ **<< ຢ່າງພາສິດບູຮານກ່າວໄວ້ວ່າ: ຍິ່ງຢາກໄດ້ ຍິ່ງບໍ່ໄດ້. ຍິ່ງໃຫ້ ຍິ່ງໄດ້ທັງໝົດ ຍິ່ງຢາກໄປຍິ່ງບໍ່ຮອດ. ຍິ່ງຫາ ຍິ່ງບໍ່ພໍ້ ຫລື ຜູ້ຫາໄດ້ກິນຫົວ ຜູ້ຄົວໄດ້ກິນໃສ້. ຜູ້ຢູ່ລ້າໆໄດ້ກິນໝົດທັງຕົວ >>** ທັງໝົດນີ້ເປັນ ພາສາທັມ ຄືເປັນພາສາຈິດໃຈ

## 9. ບັ້ນທ້າຍຊີວິດ

ຜ່ານເວລາອັນຍາວໄກ ຫລາຍສິບໆ ປີຜ່ານມາ ແລະ ຜ່ານໄປຮ່າງກາຍຈິດໃຈກໍປ່ຽນແປງ ໄປຕາມກົດທັມມະຊາດ ຄື ມີການເກີດຂຶ້ນ ຕັ້ງຢູ່ ແລ້ວ ກໍດັບໄປເຊື່ອມໄປ ຮ່າງກາຍທ່ານອາຈາຣຍ໌ ກໍປ່ຽນໄປ ຈາກເດັກນ້ອຍກໍກາຍມາເປັນໜຸ່ມບ່າວ ແລ້ວ ກໍສ້າງຄອບຄົວແລ້ວ ຫາຢູ່ກິນໄປຕາມພາສາໂລກໆ ມີເງິນຄຳ ກໍມ່ວນຊື່ນ ສະໜຸກສະໜານ ໄປຕາມພາສາ ຄົນຫລົງໂລກ ເບື່ອໂລກກໍເຂົ້າສະແຫວງຫາໂມກຂະທັມ ຫວັງໜີຈາກກອງທຸກ ແລ້ວກໍເສຍສະລະຊ່ວຍເຫລືອເພື່ອນມະນຸສ ຊີ້ແນະແນວທາງສັນຕິສຸຂ ຕາມກຳລັງສະຕິປັນຍາຈະກະທຳໄດ້ ຊີວິດຮ່າງ ກາຍ ທ່ານກໍສັ້ນເຂົ້າລົງທຸກຂະນະ ຄວາມແກ່ເຈັບຕາຍກໍຍັບໃກ້ເຂົ້າ ສຸດທ້າຍທ່ານ ອາຈາຣຍ໌



<< ຢ່າເຂົ້າໃຈໄປວ່າຕ້ອງຮຽນມາກ ຕອັ້ງປະຕິບັດລຳບາກຈຶ່ງພົ້ນໄດ້
ຖ້າຮູ້ຈິ່ງສິ່ງດຽວກໍງ່າຍດາຍ ຮູ້ດັບໄດ້ບໍ່ເຫລືອເຊື້ອກໍລອງ >>

ກໍຈາກໂລກໄປ ສູ່ທັມມະຊາຕເດີມແທ້ ຂອງສັບພະສິ່ງທັງປວງ ທ່ານມາຢູ່ໃນບົນໜ້າໂລກ ເປັນເວລາຫລາຍປີ ສ້າງໂລກມາຫລາຍປີ ທ່ານເອງກໍມີພະຍາດປະຈຳຕົວຄື ( ໂລກເບົາຫວານ ) ມາຫລາຍສິບປີ ເຂົ້າມາບວດສະແຫວງຫາໂມກຂະທັມ ເປັນເວລາ 24 ປີ ຈາກປີ ຄ.ສ 1931 ມາຮອດປີ ຄ.ສ 2008 ແລ້ວກໍມໍລະນະພາບລະສັງຂາຣ ຈາກໂລກໄປ ດ້ວຍຄວາມສະຫງົບສຸຂ ໃນວັນທີ 11\9\08 ເວລາ 3ໂມງແລງ ລວມອາຍຸໄດ້ 77 ປີ ຖືວ່າ ທ່ານມາຢູ່ສ້າງໂລກ ຮັບໃຊ້ໂລກ ພຽງຊົ່ວຄາວ ເພາະໂລກເປັນທີ່ພັກຮ້ອນ ພັກພ່ອນ ສ້າງຄວາມດີຄວາມຊົ່ວ ສ້າງບາບ ສ້າງບຸນ ຕາມກິເລສ ຕັນຫາ ຫລື ຕາມສະຕິປັນຍາ ພາໃຫ້

ກະທຳ ແລ້ວກໍ່ຈາກໂລກໄປ ເຫລືອໄວ້ແຕ່ຜົນງານ ຄວາມດີ ຄວາມຊົ່ວ ທີ່ເຮົາໄດ້ສ້າງໄວ້ແກ່ໂລກມະນຸສ ແຕ່ທ່ານ ພຣະອາຈາຣຍ໌ ບໍ່ໄດ້ເອົາຫຍັງຕິດຕົວ ໄປນຳເລີຍ **ຢ່າງບູຮານເພິ່ນກ່າວໄວ້ວ່າ << ເມື່ອເກີດມາມີຫຍັງມາກັບຕົວ ຍັງເມົາມົວໂລບມາກ ທຳບາບໃຫຍ່ ມາໂຕເປົ່າ ແລ້ວຈະເຝົ້າເອົາສິ່ງໃດ ເມື່ອເຮົາໄປ ເຮົາກໍ່ໄປໂຕເປົ່າ ເໝືອນເຮົາມາ >>** ກ່ອນອາຈາຣຍ໌ ຈະມໍລະນະພາບໄປ ທ່ານກໍ່ບໍ່ໄດ້ສັ່ງສອນອັນໃດເປັນພິເສດ ຖ້າຄົນໄປຖາມເລື່ອງອາການພະຍາດ ທ່ານກໍ່ຊີ້ໄປຫາພຣະ ເນນທີ່ອຸບປະຖາກ ຖ້າສົນທະນາທັມ ຫຼືຖາມທັມມະ ແມ່ນໃຫ້ຄວາມສຳຄັນເປັນພິເສດ ແລະ ຕອບປັນຫາໄດ້ດີສະເໝີ ຖ້າຖາມວ່າ ຈະຮຽນ ແລະ ປະຕິບັດທັມຢ່າງໃດ ຈຶ່ງຈະຖືກຕ້ອງ ທ່ານຕອບວ່າ **ຕ້ອງຮຽນເພື່ອດັບຄວາມປຸງແຕ່ງ ແລະຮູ້ເທົ່າທັນຕໍ່ການ ສຳຜັດ** ເລື້ອງໄສຍະສາດ ແມ່ນດັບທຸກບໍ່ໄດ້ ເປັນການແກ້ໄຂປັນຫາທີ່ປາຍເຫດ ເພາະເຫດທີ່ແທ້ມັນຢູ່ທີ່ ກາຍ ວາຈາ ໃຈ ຂອງເຮົານີ້ເອງ ສິ່ງທີ່ທ່ານຮັກຫອມທີ່ສຸດກໍ່ຄື ປຶ້ມສິກສາທັມມະ ຄຳພາວະນາ ກ່ອນໃກ້ຈະ ມໍລະນະພາບ ເພິ່ນໃຫ້ພາວະນາວ່າ **( ເນຕັງມະມະ ເນໂສນະທະສະມິ ນະເນໂສອັຕຕາ : ນີ້ບໍ່ແມ່ນເຮົາ ນັ້ນບໍ່ແມ່ນຂອງເຮົາ ນີ້ບໍ່ແມ່ນຕົວຕົນຂອງເຮົາ )**

ພຣະອາຈາຣຍ໌ ເກີດມາໄດ້ເອົາຄວາມແກ່-ເຈັບ-ຕາຍ ມາພ້ອມແລ້ວພວກເຮົາທຸກຄົນ ກໍ່ຫນີບໍ່ພົ້ນ ຈາກສິ່ງດັ່ງກ່າວນັ້ນ ມີແຕ່ພຣະອະຣິຍະເຈົ້າເທົ່ານັ້ນຈຶ່ງຫລຸດພົ້ນຈາກວັຕຕະຈັກໄດ້ ແລ້ວທຳຢ່າງໃດ ພວກເຮົາຈະຕາຍຢ່າງຜູ້ສະຫງົບເຢັນ ບໍ່ມີຄວາມກັງວົນອາໄລອາວອນນຳໂລກ ດັ່ງນັ້ນ ຈຶ່ງເດີນຕາມທາງພຣະອະຣິຍະເຈົ້າ

*ເຂົ້າສູ່ແດນແຫ່ງຄວາມສະຫງົບ ຊີວິດກໍຈະພົບແຕ່ສັນຕິສຸຂ ໂດຍບໍ່ຕ້ອງສົງໃສ%*

## ຄະຕິທັມ ພຣະອາຈາຣຍ໌ ພູມ ເດຊວົງສາ

| | |
|---|---|
| *ສິ່ງທີ່ເປັນບັນຫາ* | *ຄືຄວາມຂັດແຍ້ງ* |
| *ສິ່ງທີ່ຮ້າຍແຮງ* | *ຄືຄວາມ ເມົາ* |
| *ສິ່ງທີ່ທຳໃຫ້ເບົາ* | *ຄືການປ່ອຍວາງ* |
| *ສິ່ງທີ່ເຮັດໃຫ້ເກີດແສງສະວ່າງ* | *ຄືດວງປັນຍາ* |
| *ສິ່ງທີ່ປາຖະນາ* | *ຄືນິຣາມິດສຸຂ (ຄືສຸຂໃນນິພພານ)* |
| *ສິ່ງທີ່ໝົດທຸກ* | *ຄືການດັບກິເລສ* |
| *ສິ່ງທີ່ເປັນເຫດໃຫ້ເກີດບັນຫາທັງປວງ* | *ຄືອະວິຊຊາຄວາມໂງ່ ງ່າວ ງົມງວາຍ* |
| *ສິ່ງທີ່ເປັນມິດສະຫາຍ* | *ຄືກາຍໃຈມີພຣະທັມ ຄຸ້ມຄອງ* |
| *ສິ່ງທີ່ທຳໃຫ້ໃຈບໍ່ເສົ້າໝອງ* | *ຄືການມອງໂລກດ້ວຍຄວາມເປັນຂອງວ່າງ* |
| *ສິ່ງທີ່ເປັນທາງອັນປອດໄພ* | *ຄືມີກາຍໃຈເດີນຕາມຄອງອະຣິຍະມັຄ* |

- *ຈົ່ງຢູ່ໃນໂລກ ຢ່າຕົກເປັນເຍື່ອຂອງໂລກ. ເພາະຈະຖືກເບັດພະຍາມານ ທີ່ສາບທາ ດ້ວຍຄວາມສວຍງາມ ອັນໜ້າຫລົງໄຫລ*
- *ຈົ່ງຫາຄວາມເຢັນຢູ່ກາງເຕົາຫຼອມ. ຈົ່ງສະແຫວງຫາຄວາມສຸຂ ຢູ່ທີ່ການກຳນົດ ຄວາມທຸກຂັງ. ອານິຈຈັງ ອານັຕຕາ ເປັນອາລົມກັມມະຖານ*

- ຈົ່ງໃຊ້ຊີວິດຢູ່ ໃນໂລກ ເໝືອນລົ້ນໆ ຢ່າໃຫ້ຖືກຜິດແຂ້ວຂອງໆ
- ບົດຮຽນທີ່ທຳໃຫ້ຄວາມຈິງ ແລະ ແມັ່ນຍຳທີ່ສຸດ ຄືບົດຮຽນທີ່ໄດ້ມາຈາກປະສົບການຈິງໆໃນຊີວິດ
- ໂລກເປັນລະຄອນໂຮງໃຫຍ່ ທີ່ໜ້າເບິ່ງທີ່ສຸດເຊິ່ງ ມີຈິດປະກອບດ້ວຍກິເລສ ແລະ ຕັນຫາ ເປັນຜູ້ກຳກັບການສະແດງ ຕົວເຮົາເອງຜູ້ນຶ່ງ ກໍ່ຮ່ວມສະແດງ ໃນລະຄອນໂລກດ້ວຍ
- ໃຫ້ທານຢ່າໃຫ້ເສຍຊັບ ກິນກັບຢ່າໃຫ້ເສຍແກງ ທຳງານຢ່າໃຫ້ເສຍແຮງ ກິນເຂົ້າສຸກຢ່າໃຫ້ເສຍເຂົ້າສານ ໄດ້ນິພພານມາ ໂດຍບໍ່ຕ້ອງເສຍເງິນ
- ທ່ານເທສະນາເລື້ອຍໆວ່າ:

    ພຸທທະສາສະນານັ້ນເປັນສາສະນາ ຂອງຜູ້ຮູ້- ຜູ້ຕື່ນ -ຜູ້ເບີກບານ

- ຄຳວ່າຜູ້ຮູ້ ໝາຍເຖິງ ຮູ້ຄວາມທຸກ- ຮູ້ເຫດແຫ່ງທຸກ-ຮູ້ຄວາມບໍ່ມີທຸກ( ນິພພານ )ຮູ້ຂໍ້ປະຕິບັດເພື່ອຄວາມພົ້ນທຸກ(ອະຣິຍະມັດ)
- ຄຳວ່າຜູ້ຕື່ນໝາຍເຖິງ ຜູ້ມີສະຕິສຳປະຊັນຍະສົມບູນ ຮູ້ເທົ່າທັນຕໍ່ໂລກ ບໍ່ໃຊ້ອຳນາດ, ເຫັນ ແກ່ຄວາມໂລບ- ໂກດ- ລົງ
- ຜູ້ເບີກບານໝາຍເຖິງຈິດ ສະອາດ- ສະວ່າງ- ສະຫງົບ ຈິດກະເສມ ບໍ່ເສົ້າໂສກ ແລະ ມີຄວາມສະຫງົບເຢັນ

- ພຸທທະສາສະນາ ນັ້ນເປັນສາສະນາແຫ່ງປັນຍາ ເພາະຄົນບໍລິສຸດໄດ້ດ້ວຍປັນຍາ

- ເປັນສາສະນາແຫ່ງເຫດຜົນ ບໍ່ໃຫ້ເຊື່ອຄວາມງົມງວາຍ ແລະຂ່າວເລົ່າລື
- ເປັນສາສະນາແຫ່ງ ເມຕຕາ ປາຖະນາດີຕໍ່ເພື່ອນມະນຸສນຳສັນຕິສຸຂມາສູ່ໂລກ

-ເປັນສາສະນາແຫ່ງປັຈເຈກກະຊົນ ຄື ຮູ້ໄດ້ເຫັນໄດ້ສະເພາະຕົນເອງ
-ເປັນສາສະນາແຫ່ງການຊ່ວຍຕົນເອງ ບໍ່ເຊື່ອຖືການອ້ອນວອນ ຮ້ອງ ຂໍ
-ເປັນສາສະນາແຫ່ງກັມລິຄິດ ຄືການເຊື່ອພົນຂອງ ການກະທຳເຮົາ ເອງ
-ເປັນສາສະນາແຫ່ງຍຸກສະໃໝ ທົນຕໍ່ການພິສູດ ທຸກກະລະສະໃໝ

➤ ເຂົາຖາມພຣະອາຈາຣຍ໌ ພູມວ່າ: ທຸກສາສະນາເປັນຢາເສບຕິດແມ່ນ ຫຼືບໍ່.?

- ອາຈາຣຍ໌ຕອບວ່າ: ທຸກສາສະນາຖ້າມອງບາງແງ່ ບາງມູມກໍ່ເປັນ ສິ່ງເສບຕິດໄດ້ ເພາະສ້າງຄວາມອ່ອນແອໃຫ້ແກ່ສາວົກ ກົດໜ່ວງ ຄວາມກ້າວໜ້າຂອງສັງຄົມ ແຕ່ພຸທທະສາສະນາ ອັນແທ້ຈິງນັ້ນ-ແມ່ນ ທຳລາຍສິ່ງເສບຕິດທຸກຊະນິດ ບໍ່ວ່າເລື້ອງວັດຖຸ ກໍ່ຄືຈິຕໃຈ ( ຮູບພຣະທັມ ນາມພຣະທັມ )

**-ຕົວຢ່າງ** ດື່ມນ້ຳເມົາ ທ່ຽວກາງຄືນ ເບິ່ງການຫລິ້ນ ຫລິ້ນການພະ ນັນ ຄົບຄົນຊົ່ວເປັນມິດ ຂີ້ຄ້ານອອກແຮງງານ ອັນນີ້ຄືອະບາຍຍະມຸກ ເປັນສິ່ງເສບຕິດຂັ້ນຕົ້ນ -ແຕ່ພຸທະສາສະນາ ຍັງໄປໄກກ່ວານັ້ນອີກ ຮູບງາມໆ ສຽງມ່ວນໆ ກິ່ນຫອມໆ ຣົດແຊບໆ ສຳຜັດອັນນຸ້ມນວນ ຕະ ຫລອດເຖິງ ກິນ ການ ກຽດ ໜ້າຕາ ຊື່ສຽງ ກໍ່ຍັງເປັນສິ່ງເສບຕິດໄດ້ ເພາະທຳໃຫ້ຈິຕໃຈ ຂາດບໍ່ໄດ້ ຮ້ອນຮົນ ຢາກຈະມີຈະເປັນ ຢ່າງນີ້ ເລື້ອຍໆໄປ

-ມີພຸທທະພາສິດກ່າວໄວ້ວ່າ **( ປາປະປຸນຍັງ ປາຫີນັສສະນິສ ສະໂຕປະຣິນິພພູໂຕ ): ເປັນຜູ້ລະບຸນ ແລະ ບາບເສຍໄດ້ ກໍເປັນຜູ້ ດັບສະນິດບໍ່ມີສ່ວນເຫຼືອ** ແມ່ນກະທັ້ງ ບຸນແລະບາບ ຄວາມດີ ແລະ

ຄວາມຊົ່ວ ກໍ່ຍັງເປັນສິ່ງເສບຕິດທາງດ້ານຈິດໃຈໄດ້ ເພາະມັນເປັນສັງຂະຕະທັມຄື ທັມທີ່ມີເຫດປັຈຈັຍປຸງແຕ່ງ ໄປຕາມ ກິເລສ ກັມ ວິບາກ ທີ່ໝູນວຽນເປັນວັຕຕະຈັກຢູ່ຢ່າງນີ້ ເລື້ອຍໆໄປ **ນອກເສຍຈາກວິສັງຂານ ຫຼື ອະສັງຂະຕະທັມ ຄືນິພພານ ຈຶ່ງບໍ່ມີເຫດປັຈຈັຍປຸງແຕ່ງ** ແລະ ຢູ່ເໜືອການປຸງແຕ່ງ ເພາະຫລຸດພົ້ນຈາກສິ່ງເສບຕິດທາງດ້ານຈິດໃຈໄດ້ ຄືມີຈິດໃຈຢູ່ເໜືອໂລກ ( ໂລກຸຕະຣະທັມ ) ເພາະມີຄວາມສະອາດ ສະວ່າງ ສະຫງົບ ເປັນທີ່ຢູ່ຂອງຈິດໃຈ %




( ພາບປົດສະນາທັມຂອງທ່ານສຳລັບການເຜີຍແຜ່ພຸທະທັມ )

( ພຸທທະສັຕຕະວັຕທີ8 )

ເກີດແບ່ງຊັ້ນວັນນະເຕັມຂະໜາດ ຕັດພວກສູທອອກໄປຂາດບໍ່ສ້າງສັນ ເລັ້ມກືນພຸດ ເລືອນຫາຍໄປດ້ວຍກັນ ນັ້ນຄືພາມຍາມກຳແຫງແຫ່ງອິນເດຍ.

# ວິທີເຮັດໃຫ້ອາຍຸຍືນ (ຢາອາຍຸວັດທະນະ)

ບັນລະຍາຍໂດຍ ພຣະອາຈາຣຍ໌ ພູມ ເດຊວິງສາ

ກ່ອນເວົ້າເລື້ອງອາຍຸຍືນ, ຂໍໃຫ້ທ່ານຜູ້ອ່ານສັງເກດຕຶລາຄາເບິ່ງກ່ອນວ່າ "ຄວາມປົກກະຕິຂອງຄົນ" ນັ້ນມີລັກສະນະແນວໃດກັນແທ້? ພວກທີໜຶ່ງຕີລາຄາວ່າ ເວລາສົມຫວັງ ຫືລ ໄດ້ດັ່ງໃຈຂອງຕົນ ກໍແມ່ນສະແດງຄວາມດີໃຈ ຢ່າງຕື່ນເຕັ້ນ ເພີດເພີນມ່ວນຊື່ນ ສະໜຸກສະໜານເຮຮາ ແລະ ບາງເທື່ອກໍ່ຫົວອອກມາແຮງຢ່າງສຸດຂີດ, ເວລາຜິດຫວັງຫືລບໍ່ໄດ້ດັ່ງໃຈ ກໍສະແດງອອກມາ ໃນທາງໂສກເສົ້າເສຍອົກເສຍໃຈ ຫືລ ຖ້າຮຸນແຮງກໍຮ້ອງໃຫ້ຮ່ຳໄຮຈົນລືມຕົວ ແລະ ເວລາພົບກັບສິ່ງທີ່ໜ້າຢ້ານ ກໍແມ່ນຕົກໃຈສັ່ນເຊັນ ບໍ່ມີສະຕິເປັນຕົ້ນ ນີ້ຄືຄວາມປົກກະຕິຂອງຄົນທົ່ວໄປ. ແຕ່ພວກທີສອງຕີລາຄາວ່າ (ຄວາມປົກກະຕິຂອງຄົນ) ແມ່ນກົງກັນຂ້າມກັບພວກໜຶ່ງ, ເພາະເຫັນວ່າສະພາບກາຍວາຈາ ແລະ ແນວຄິດຈິດໃຈຂອງຄົນນັ້ນຢູ່ໃນຄວາມປົກກະຕິຕະຫລອດເວລາ, ບໍ່ວ່າຈະພົບກັບເຫດການດີຮ້າຍຊະນິດໃດກໍ່ຕາມ, ຜູ້ນັ້ນແມ່ນບໍ່ສະແດງຄວາມຫວັ່ນໄຫວໃດ ໆ ໃຫ້ເຫັນເລີຍ, ມີແນວໃດຄວນ ແກ້ໄຂກໍ່ເຮັດໄປຕາມສະຕິປັນຍາທີ່ປົກກະຕິ ບຸກຄົນທີ່ມີຄວາມປົກກະຕິ ຊະນິດນີ້ແມ່ນບຸກຄົນທີ່ອາຍຸຍືນທີ່ສຸດ ແລະ ມີສະຕິສົມບູນທີ່ສຸດດ້ວຍ. ນີ້ຄືຄວາມປົກກະຕິແທ້ຂອງຄົນ. ສະນັ້ນຄວາມເຫັນ ແລະ ຕີລາຄາຂອງພວກໜຶ່ງກໍ່ແມ່ນຖືກຕ້ອງເພາະຄວາມດີໃຈ ແລະ ມ່ວນຊື່ນເພີດເພີນໄປນັ້ນ ຄວາມດັນຂອງເລືອດໃນສະໝອງເພີ້ມຂື້ນກວ່າທຳມະດາຜູ້ມີຄວາມດັນສູງຢູ່ແລ້ວກໍ່ອາດເສັ້ນເລືອດໃນສະໝອງພິການ ຫລື ແຕກຕາຍກໍ່ໄດ້, ຫລືຜູ້ມີເຊື້ອຫົວໃຈ

ວາຍຢູ່ແລ້ວ ອາດທົວໃຈວາຍຕາຍກໍ່ໄດ້ ນີ້ຄືຄວາມຜິດປົກກະຕິຂອງຄົນ ຂໍ້ທີໜຶ່ງ ຈະເຮັດໃຫ້ອາຍຸຍືໄດ້ຢ່າງຖືກຕ້ອງ ຖ້າກົງກັນຂ້າມຜູ້ນັ້ນມີຄວາມ ໂສກເສົ້າ ເສຍໃຈ ນ້ອຍໃຈ ຫ່ວງແຫ້ງໃຈ ຫລື ມີຄວາມໂມໂຫໂຫໂສ ຫຼື ເກີດຄວາມຢ້ານສັ່ນ ເຊັ່ນໃດໜຶ່ງກໍເຊັ່ນກັນ ກໍພາໃຫ້ຄວາມດັນເພີ້ມຂື້ນ ແລະ ມີສູງຂື້ນເຜົາໄຫ້ມຕົວເອງ ມີຄວາມທຸກທໍລະມານ ຢ່າງເຫັນໄດ້ຈະ ແຈ້ງ ຊຶ່ງຕັດຮອນອາຍຸຜູ້ນັ້ນໃຫ້ສັ້ນລົງເລື້ອຍ ໆ ທັງໝົດນີ້ ຄືຄວາມຜິດ ປົກກະຕິຂອງຄົນ ແຕ່ບາງຄົນເຫັນວ່າ ການຝຶກຫັດອ່ານປື້ມທົວວັນລະ ທ້ານາທີເປັນການຕໍ່ອາຍຸນັ້ນ ແມ່ນເຂົ້າໃຈຜິດຕໍ່ຄວາມເປັນຈິງ, ເພາະ ການອ່ານປື້ມທົວນັ້ນ ເປັນການຜ່ອນຄາຍຄວາມເຄັ່ງຄຽດ ຂອງບຸກຄົນຜູ້ ມີແນວຄິດເຄັ່ງຄຽດຢູ່ແລ້ວໃຫ້ລົດລົງ ການຕໍ່ອາຍຸແທ້ທີ່ຈິງ ຄວາມເຄັ່ງ ຄຽດ ແມ່ນການຕັດຮ່ອນອາຍຸໃຫ້ສັ້ນເຂົ້າຢູ່ແລ້ວ ແລະ ເປັນການບີບຮັດ ລະບົບປາສາດ ໃຫ້ເຮັດວຽກໜັກຂື້ນກວ່າທຳມະດາ ຊຶ່ງພາໃຫ້ຄວາມດັນ ເລືອດແຮງກ່ວາປົກກະຕິແນ່ນອນ: ອີກທາງໜຶ່ງກົງກັນຂ້າມ ການອ່ານ ປື້ມທົວເກີນຈຳເປັນ ກໍແມ່ນເຮັດໃຫ້ລະບົບເລືອດລົມ ຂະຫຍາຍຕົວອອກ ກວ່າປົກກະຕິ ຄວາມດັນແຮງກວ່າປົກກະຕິທຳມະດາເຊັ່ນກັນ ເວົ້າສະ ຫລຸບແລ້ວຄວາມເຄັ່ງຄຽດ ແມ່ນອຽງໄປທາງຄວາມເສຍໃຈ ແລະ ການ ອ່ານປື້ມທົວເກີນຈຳເປັນ ແມ່ນອຽງໄປທາງຄວາມດີໃຈ ເຊິ່ງເປັນຄວາມບໍ່ ພໍດີທັງສອງຢ່າງ: ຍ້ອນຄວາມບໍ່ພໍດີດັ່ງກ່າວມານັ້ນ ຈຶ່ງພາໃຫ້ຢູ່ບໍ່ເປັນ ສຸຂ ແລະ ເຮັດໃຫ້ອາຍຸສັ້ນໄດ້ ທີ່ນີ້ວິທີປະຕິບັຕ, ເພື່ອໃຫ້ອາຍຸຍືນ ແລະ ມີຄວາມສຸຂຕະຫລອດໄປນັ້ນ ອັນສຳຄັນ ແລະ ເບື້ອງຕົ້ນທີ່ສຸດ ຄວນ ຫລີກເວັ້ນ ຈາກຕົ້ນທາງຍ່າງໄປສູ່ຄວາມເດືອດຮ້ອນ ມີດັ່ງຕໍ່ໄປນີ້:

1.ບໍ່ດື່ມກິນຂອງເມົາທຸກຊະນິດເພາະມັນທຳລາຍສະຕິພື້ນຖານ

2.ບໍ່ທ່ຽວຫລິ້ນໃນເວລາຄ່ຳຄືນ

3.ບໍ່ເບິ່ງມະຫໍລະສົບ(ການຫຼິ້ນຕ່າງໆ)ດ້ວຍຄວາມຫລົງໄຫລມົວເມົາ

4.ບໍ່ຫຼິ້ນການພະນັນທຸກປະເພດ

5.ບໍ່ຄົບຄົນຊົ່ວຄົນພານເປັນໝູ່ເພື່ອນມິດສະຫາຍ

6.ບໍ່ຂີ້ຄ້ານອອກແຮງງານທຸກຊະນິດ ທັງສ່ວນຕົວເອງ, ສ່ວນສັງຄົມ, ສ່ວນຊາດ ແລະ ສາກົນ

ນອກຈາກນັ້ນກໍ່ແມ່ນໃຫ້ຮູ້ຈັກ ຄວາມພໍດີຖືກຕອ້ງເປັນທັມ ແລະ ຄົບຖ້ວນໃນເລື້ອງຊີວິດການເປັນຢູ່ເຊັ່ນ: ກິນພໍດີ ນຸ່ງຫົ່ມພໍດີ ຢູ່ໃຫ້ພໍດີ ໃຊ້ສອຍວັດຖຸເຂົ້າຂອງຕ່າງ ໆ ໃຫ້ພໍດີ ການບໍລິຫານຮ່າງກາຍ ການອາບ ການຖ່າຍພໍດີເປັນຕົ້ນ ເຊິ່ງເປັນການຮັກສາສຸກຂະພາບທາງກາຍ ເປັນຂັ້ນພື້ນຖານ.

ທີ່ນີ້, ຂັ້ນສູງສຸດຂຶ້ນໄປແມ່ນ ການຮັກສາສຸກຂະພາບທາງດ້ານແນວຄິດຈິດໃຈ ຊຶ່ງເປັນຕົວການສຳຄັນທີ່ຄົນທົ່ວໄປບໍ່ສົນໃຈ ບໍ່ເອົາໃຈໃສ່ເທົ່າທີ່ຄວນໃນເລື້ອງນີ້ ຈຶ່ງພາໃຫ້ເປັນໂລກປະສາດຄວາມດັນສູງ, ພະຍາດລຳໄສ້ກະເພາະອາຫານ ແລະ ອື່ນ ໆ ຕາມມາເພື່ອຕັດຮອນຊີວິດຂອງຄົນໃຫ້ສັ້ນເຂົ້າໂດຍບໍ່ຮູ້ສຶກຕົວ ສະນັ້ນການຮັກສາ ແລະ ປະຕິບັດໃຫ້ແນວຄິດປົກກະຕິຄືທີ່ເຢັນອົກເຢັນໃຈ ບໍ່ຫວັ່ນໄຫວຕໍ່ອາລົມໃດ ໆ ທີ່ມາກະທົບຖືກຕ້ອງ ຈຶ່ງເປັນການຍາກແກ່ຄົນທົ່ວໄປ ເພາະບໍ່ເຫັນໂທດໄພອັນຕະລາຍທີ່ຫນ້າຢ້ານດັ່ງກ່າວມາແລ້ວ ແລະ ສ່ວນຫລວງຫລາຍຈຶ່ງກາຍເປັນຄົນເຈົ້າອາລົມ ໂກດງ່າຍສຸນສຽວ, ໃຜເຮັດຫັຍງບໍ່ຖືກໃຈ ຫລື ບໍ່ທັນອົກທັນໃຈຕົນ ມັກຈົ່ມວ່າໃຫ້ຕ່າງ ໆ ນາ ໆ ຈົນລືມສະຕິ ຄົນຊະນິດນີ້ແມ່ນອາຍຸບໍ່ຄອຍຍືນແນ່ນອນ, ຂໍໃຫ້ສັງເກດເບິ່ງດ້ວຍຕົນເອງ ຈະເຫັນໂທດໄພດັ່ງກ່າວໄດ້, ແລະ ຈະມີກຳລັງໃຈສູງໃນການພະຍາຍາມ ຫລີກເວັ້ນໂທດໄພນີ້ໄດ້. ຕາມປົກກະຕິທຳມະດາ, ຄົນເຮົາທົ່ວໄປມີແນວຄິດມັນສະຫມອງບໍລິສຸດຜ່ອງໃສຢູ່ແລ້ວເປັນພື້ນຖານ, ແຕ່ອາລົມຂ້າງນອກເຂົ້າມາ

ເຮັດໃຫ້ເສົ້າຫມອງ ເຄັ່ງຄຽດເປັນຄັ້ງຄາວໄປສະ ນັ້ນເວລາໃດມີການໄດ້ດັ່ງໃຈ ຫືລ ສົມຫັວງ ກໍ່ຢ່າເກີດຄວາມດີໃຈຫລົງໄຫລມົວເມົາ ຈົນຂາດສະຕິ, ຈົ່ງຢຸດຢັ້ງຄວາມດີໃຈນັ້ນໄວ້ ຢ່າໃຫ້ຮຸນແຮງ, ເປັນພຽງເກີດຄວາມຍິ້ມແຍ້ມແຈ່ມໃສ ຢ່າງທັມມະດາເລັກນ້ອຍກໍ່ພໍ, ຄວາມຜິດປົກກະຕິທາງດ້ານແນວຄິດບໍ່ເກີດຂຶ້ນ. ໃນທາງກົງກັນຂ້າມ ເມື່ອປະສົບກັບຄວາມຜິດຫວັງ ຫືລ ບໍ່ໄດ້ດັ່ງໃຈ ກໍ່ຢ່າໂກດຢ່າ ເສຍອົກເສຍໃຈ ມັນເປັນທັມມະດາຂອງມັນຢ່າງນັ້ນ ເຖິງເຮົາຈະໂກດ ຫລື ເສຍໃຈຈົນກິນບໍ່ໄດ້ ນອນບໍ່ຫລັບກໍ່ບໍ່ມີອັນໃດດີຂຶ້ນ ມີແຕ່ເສຍຫາຍຂາດທຶນລົງຢ່າງດຽວ, ເຮັດໃຫ້ສຸຂະພາບທາງກາຍທາງຈິຕໃຈ ແລະ ທາງສະຕິປັນຍາຫລຸດຫຍ້ອຍລົງເລື້ອຍ ໆ ອາຍຸຂອງເຮົາກໍ່ສັ້ນເຂົ້າ.

ດັ່ງນັ້ນຈົ່ງໃຊ້ຄວາມອົດທົນ, ຄວາມຂົ່ມໃຈ ແລະ ຄວາມເສຍສະລະສິ່ງເຫົ່ລານີ້ອອກໄປໃຫ້ໄດ້ ຖ້າເຮົາພະຍາຍາມຄວບຄຸມບັງຄັບ ແລະ ຮອບຮູ້ຄວາມຈິງເຖິງໄພອັນຕະລາຍນີ້ ຢູ່ເປັນປະຈຳແລ້ວ ຄວາມໂກດເຄືອງຕ່າງ ໆ ທີ່ເປັນນິສັຍຂອງເຮົາຄິດວ່າແກ້ບໍ່ໄດ້ນັ້ນ ຈະລົດລົງເລື້ອຍ ໆ ສັກວັນໜຶ່ງ ເຮົາກໍ່ສາມາດປ່ຽນນິດໃສຈາກແນວຄິດໂກດງ່າຍ ກັບມີແນວຄິດປອດໂປ່ງໃຈເປັນປົກກະຕິ ຢູ່ໃນຕໍ່ຫນ້າທຸກສະຖານະການ ເຖິງວ່າຄົນອື່ນຈະກ່າວຮ້າຍດ່າວ່າຮຸນແຮງທໍ່ໃດກໍ່ຕາມ ເຮົາກໍ່ສາມາດມີຈິຕໃຈປົກກະຕິຢູ່ໄດ້ຕະຫລອດໄປ ເພາະມັນເປັນນິດໃສທີ່ເຮົາສ້າງຂຶ້ນໃໝ່ ຢ່າງໝັ້ນຄົງແລ້ວ, ແລະ ເວລານັ້ນເຮົາໃຊ້ຄວາມປົກກະຕິ ຂອງເຮົາແກ້ໄຂເຫດການທຸກຢ່າງໂດຍບໍ່ມີການຜິດພາດ ເພາະເຫັນທຸກບັນຫາ ເກີດຂຶ້ນຢ່າງແຈ່ມແຈ້ງ ຊຶ່ງປະເສີດກ່ວາເອົາຄວາມໂກດ ຫລື ຄວາມເສຍໃຈຕັດສິນບັນຫາຢ່າງສົມທຽບກັນບໍ່ໄດ້.

ອີກບັນຫາໜຶ່ງທີ່ສຳຄັນ ຄືເລື່ອງຂອງເວລາຊຶ່ງມີພາສິດບອກໄວ້ວ່າ "ເວລາເປັນເງິນເປັນຄຳ, ຈົ່ງຮີບຮ້ອນນຳເວລາ, ຈົ່ງຮັກສາເວລາ, ຢ່າເສຍສັດ

ຈະໃນເລື້ອງກ່ຽວກັບເວລາ" ສັງເກດຕີລາຄາໃນເລື້ອງນີ້ ຈຶ່ງເກີດຫິວເສຍຍ້ອນເວລານີ້ເປັນປະຈຳ ແລະ ໂດຍບໍ່ຮູ້ສຶກຕົວດວ້ຍ. ດັ່ງນັ້ນຖ້າມີສິ່ງໃດເກີດຂຶ້ນແກ່ເຮົາກ່ຽວກັບເວລາ ກໍ່ຕ້ອງລໍໄດ້ ຄອຍໄດ້ ດ້ວຍຄວາມເຢັນໃຈເຖິງຈະຟ້າວ ຫືລ ຮີບຮ້ອນບໍາເວລາ, ກໍ່ຈົ່ງຟ້າວຫືລຮີບຮ້ອນດ້ວຍຄວາມໃຈເຢັນ ຈຶ່ງຈະມີຄວາມປົກກະຕິແທ້ຈິ່ງ ໃນທາງໃຈໄດ້, ບໍ່ດັ່ງນັ້ນກໍ່ຈະເປັນຄົນໂກດງ່າຍວ່າ "ເວລາປຽບເໝືອນຍັກຂະນິດໜຶ່ງ ໄປໜ້າບໍ່ຖອຍຫລັງກີນມະນຸດ ແລະ ສັດທັງຫລາຍພ້ອມທັງຕົວມັນເອງ" ຖ້າເຮົາຮ້ອນໃຈບໍາເວລາເມື່ອໃດ ກໍ່ເໝືອນເວລາກິນເຮົາເມື່ອນັ້ນ; ແຕ່ຖ້າເຮົາໃຈເຢັນຢູ່ໄດ້ຕໍ່ທຸກເຫດການເມື່ອໃດ, ເວລາກໍ່ກິນເຮົາບໍ່ໄດ້ ແລະ ເທົ່າກັບເຮົາກິນເວລາເສຍເອງ, ເມື່ອນັ້ນຄວາມສຸຂ ຄວາມສະບາຍ ຄວາມໃຈເຢັນ ຂອງເຮົາເອົາໄວ້ເປັນນິໃສ ແລະ ເຮັດຍາວອອກໄປເລື້ອຍ ໆ ຈົນບໍ່ມີຂອບເຂດຊຶ່ງເປັນການພັກຜ່ອນໄປໃນຕົວດ້ວຍ ເຖິງວ່າຈະອອກແຮງງານທາງກາຍ ຫຼືມັນສະໝອງຢ່າງບໍ່ມີເວລາເຊົາຢູ່ກໍຕາມ, ກໍ່ຍັງຊື່ວ່າເປັນການພັກຜ່ອນຢູ່ນັ້ນເອງ ເພາະຄວາມຮ້ອນໃຈ ມັນບໍ່ເກີດຂຶ້ນເຜົາໃໝ້ເຮົາໄດ້ ຢ່າເຂົ້າໃຈເອົາເອງວ່າບໍ່ມີໃຜຈະເຮັດໄດ້.

ຄວາມຈິງຖ້າໄຊ້ຄວາມພະຍາຍາມ ໃຫ້ສະໝ່ຳສະເໝີຢູ່ເປັນປະຈຳແລ້ວ; ແມ່ນບໍ່ເຫຼືອວິໃສທີ່ຈະເຮັດບໍ່ໄດ້ ຍົກຕົວຢ່າງ ເຂົາຝຶກຫັດສັດເຊັ່ນລີງເປັນຕົ້ນ ໃຫ້ສະແດງລະຄອນກາຍະກຳ ໃຫ້ຄົນທັງຫລາຍເບິ່ງຢ່າງໜ້າອັດສະຈັນ ແລະ ບໍ່ໜ້າເຊື່ອເລີຍວ່າຈະເຮັດໄດ້ ເຖິງແນວນັ້ນສ່ວນຄົນເຮົາກໍ່ຍິ່ງສາມາດຝຶກອົບລົມໄດ້ ຍິ່ງກວ່າສັດເດຍລະສານ ຢ່າງສົມທຽບກັນບໍ່ໄດ້, ຄືສາມາດຝຶກຫັດໃຫ້ປຽນນິໃສ ໃຫ້ຢູ່ເໜືອຄວາມບີບຄັ້ນ ຈາກຄວາມຫິລງໄຫລມົວເມົາບາ ໆ ຊະນິດ ແລະ ຄວາມເຄັ່ງຄຽດ ໂສກເສົ້າ ອ່ອນແອທັງປວງໄດ້ ຢ່າງໜ້າອັດສະຈັນຍິ່ງກ່ວາດ້ວຍ.

ທີ່ນີ້, ເມື່ອເວົ້າລວມໃນເລື້ອງວິທີເຮັດໃຫ້ອາຍຸຍືນຍາວຕໍ່ໄປແມ່ນໃຫ້

ຮູ້ເຫັນ ແລະ ເຂົ້າໃຈຄວາມປົກກະຕິ ແລະ ຜິດປົກກະຕິ ຂອງຄົນຢ່າງຖືກຕ້ອງ, ແລະ ສິ່ງສຳຄັນອີກອັນໜຶ່ງຄື: ຢ່າມອງສິ່ງຕ່າງ ໆ ໃນດ້ານດີຢ່າງດຽວ (optimisme), ຫືລ ຢ່າມອງສິ່ງຕ່າງ ໆ ໃນດ້ານຮ້າຍຢ່າງດຽວ (he (pessimisme) ເພາະດ້ານດີກໍມີທັງຄຸນ ແລະໂທດ, ສ່ວນດ້ານຮ້າຍກໍມີທັງຄຸນ ແລະ ໂທດເຊັ່ນກັນ ຖ້າຮູ້ຈັກສັງເກດ ແລະ ໃຊ້ເປັນ,ຄວນເບິ່ງທັງສອງທາງ ຈື່ງຈະເຫັນບັນຫາ, ຍົກຕົວຢ່າງເຊັ່ນ: ຄວາມດີໃຈ ຫືລ ຄວາມສຸກຖ້າສະແດງອອກເກີນເຫດ ກໍແມ່ນເສຍຫາຍໃຫ້ໂທດ ເພາະໃຈເຮົາຕື່ນເຕັ້ນຈົນຄຸມສະຕິບໍ່ຢູ່, ສ່ວນຄວາມໂສກເສົ້າເສຍໃຈນັ້ນ ເຫັນໄດ້ງ່າຍມັນບີບເຂົ້າຈົນທົນບໍ່ໄຫວ ພາໃຫ້ກິນບໍ່ໄດ້ນອນບໍ່ຫລັບເປັນຕົ້ນ.

ດຽວນີ້ ເຮົາຫົລງໄຫລມົວເມົາ ດ້ວຍຄວາມຍຶດຖື ທັງຄວາມດີໃຈ ຄວາມເສຍໃຈ, ຄວາມສຸກຄວາມທຸກ, ຄວາມຮັກ, ຄວາມຊັງ, ຄວາມດີ, ຄວາມຊົ່ວເປັນຕົ້ນ, ເວົ້າສະຫຼຸບແລ້ວ ເຮົາຫົລງໄຫລຍຶດຖືທັງໄດ້ມາ(ບວກ) ແລະເສຍໄປ (ລົບ) ນັ້ນເອງເຊັ່ນ: ໄດ້ມາກໍແມ່ນດີໃຈ ເກີດຄວາມຫົລງໄຫລຍຶດຖື ເປັນຄວາມໂລບກວາດເຂົ້າມາໃສ່ຕົນ, ແຕ່ຖ້າເສຍໄປກໍແມ່ນເສຍໃຈ ເກີດຄວາມຫລົງໄຫລ ຍຶດຖືອີກແບບໜຶ່ງ ເປັນຄວາມໂກດຢາກທຳລາຍໃຫ້ດັບສູນ, ຢາກໜີໃຫ້ໄກ ບໍ່ຢາກເຫັນ ຊຶ່ງເປັນຄວາມຫົລງໄຫລມົວເມົາທັງສອງດ້ານ, ແລະ ເຮັດໃຫ້ຄົນເຮົາສະຕິລອຍ ແລະ ຂາດສະຕິຢູ່ເນື່ອງ ໆ ເມື່ອສິ່ງນີ້ເກີດຂຶ້ນເປັນນິໃສໃນທີ່ສຸດ ກໍເຮັດໃຫ້ແກ່ເກີນໄວ. ເມື່ອອາຍຸຫລາຍຂຶ້ນ ຖ້າບໍ່ຕາຍກໍຄ້າຍກັບຄົນຕາຍແລ້ວ ເພາະເປັນຄົນບໍ່ມີຄ່າຫັຍງ ໃຊ້ຫຍັງກໍບໍ່ໄດ້, ຄຸມສະຕິໄວ້ກໍບໍ່ຢູ່ ພາໃຫ້ລູກຫຼານເຂົາເບື່ອເຂົາຊັງ ເພາະມີການຈົ່ມບອັຍຈົ່ມໃຫ່ຍໃຫ້ຂົນຫູ, ໄດ້ກິນກໍວ່າບໍ່ທັນໄດ້ກິນ, ໄດ້ນອນກໍວ່າບໍ່ທັນໄດ້ນອນ ເຫຼົ່ານີ້ເປັນຕົ້ນ.

ສິ່ງເຫົ່ລານີ້ເກີດຂຶ້ນ ເພາະບໍ່ຮູ້ຈັກວິທີດຳເນີນຊີວິດການເປັນຢູ່ໃຫ້ຖືກຕ້ອງຕາມກົດເກນ ຂອງທັມມະຊາດ ຄືບໍ່ເຄີຍໄດ້ຄວບຄຸມສະຕິຂອງຕົນ

ໃຫ້ດີໃນເວລາຍັງໜຸ່ມແໜ້ນ, ສະນັ້ນເມື່ອເຖົ້າແກ່ແລ້ວຈຶ່ງສ້າງບັນຫາອັນໜັກໃຫ້ແກ່ລູກຫລານຂອງຕົນເອງ ຢ່າງບໍ່ມີທາງຫລີກເວັ້ນໄດ້ຕໍ່ໄປ ໃນເມື່ອຮູ້ແຈ້ງຄວາມຈິງຢ່າງຖືກຕ້ອງແລ້ວ, ການປະຕິບັດກໍ່ບໍ່ມີຫຍັງເຫລືອວິໃສ ພຽງຮັກສາຄວາມປົກກະຕິ ເອົາໄວ້ໃຫ້ໄດ້ ຢ່າຖືເບົາໃນເລື້ອງເລັກນ້ອຍ, ໃຫ້ດີໃຈກໍ່ບໍ່ຄວນ ຮັກກໍ່ບໍ່ຄວນ ຊັງກໍ່ໄດ້ຄວບຄຸມສະຕິ ໃຫ້ມີພາວະປົກກະຕິ ໝັ້ນຄົງໃນທຸກກໍລະນີ, ທຸກສະຖານທີ່ ເຮັດຢ່າງນີ້ຢູ່ເປັນປະຈຳດັ່ງໄດ້ກ່າວມາແລ້ວທັງໝົດ, ຜູ້ນັ້ນກໍ່ຈະໄດ້ພົບຄວາມສຸຂກາຍສະບາຍໃຈ, ມີສຸກຂະພາບເຂັ້ມແຂງຢູ່ໄດ້ ຈົນແກ່ເຖົ້າໂດຍບໍ່ຈຳເປັນຕ້ອງລໍຄອຍຮັບພອນຈາກຄົນອື່ນກໍ່ໄດ້, ເພາະສິ່ງທີ່ມາເຮັດໃຫ້ ເຮົາເສຍພາວະປົກກະຕິສຸຂໄດ້ນັ້ນ ມັນມີທີ່ມາຂອງມັນ ຄືມັນເຂົ້າມາຈາກສິ່ງທີ່ໄດ້ເຫັນທາງຕາ, ສຽງທີ່ໄດ້ຍິນທາງຫູ, ກິ່ນທີ່ໄດ້ດົມທາງດັງ, ສິ່ງທີ່ໄດ້ຊີມທາງລີ້ນ, ສິ່ງທີ່ໄດ້ສຳຜັດທາງກາຍ ແລະ ຄວາມຄິດນຶກທາງສະໝອງ ຊຶ່ງພາໃຫ້ດີໃຈ, ເສຍໃຈ, ຮັກ,ຊັງ, ສຸກ, ທຸກດັ່ງກ່າວແລ້ວ.

ສະນັ້ນເຮົາຕ້ອງ ໄດ້ສັງລວມລະວັງຮັກສາ ດວັຍສະຕິສຳປະຊັນຍະຈົນໃຫ້ຊິນເປັນນິໄສ, ເມື່ອນັ້ນກໍ່ບໍ່ຈຳເປັນ ລະວັງ ຮັກສາໃຫ້ລຳບາກອີກໂລຄາບໍ່ບຽດບຽນ ແລະ ເຮັດໃຫ້ເຮົາມີອາຍຸຍືນທີ່ສຸດ%

<u>ພຣະອາຈານພູມເດຊວິງສາ</u>

ຈົບ

# ລາຍຊື່ຜູ້ບໍລິຈາກພິມປຶ້ມປະຫວັດ

| | | |
|---|---|---|
| 1. | ພຣະອາຈາຣຍ໌ ຍາພໍ່ສົມໃຈ | 100.000 ກີບ |
| 2. | ພຣະອາຈາຣຍ໌ ທະວີໄຊ ພູມປະເສີດ | 200.000 ກີບ |
| 3. | ພຣະອາຈາຣຍ໌ ຍາພໍ່ຄຳໄພ ສຸພາຊາດ | 100.000 ກີບ |
| 4. | ພຣະອາຈາຣຍ໌ ວຽງສັກ ກັນຍານະທັມໂມ | 500.000 ກີບ |
| 5. | ພຣະອາຈາຣຍ໌ ແສນດອນ | 250.000 ກີບ |
| 6. | ພຣະອາຈາຣຍ໌ ສົມຈິດ ຈັນທະປັນໂຍ | 50.000 ກີບ |
| 7. | ພຣະອາຈາຣຍ໌ ສຸກ ສິຣິທັມໂມ | 50.000 ກີບ |
| 8. | ພຣະອາຈາຣຍ໌ ບົວລຽນ ກັນຕະທັມໂມ | 4.000.000 ກີບ |
| 9. | ພຣະອາຈາຣຍ໌ ປະສິດ ກິຕຕິສະໂຣ | 50.000 ກີບ |
| 10. | ພຣະອາຈາຣຍ໌ ດວນ ສິຣິປັນໂຍ | 25.000 ກີບ |
| 11. | ພຣະອາຈາຣຍ໌ ສຸວັນທອງ ເພັດມີໄຊ | 1.000 ບາດ |
| 12. | ຍາພໍ່ເກນ ບຸນເນົາ | 50.000 ກີບ |
| 13. | ສົມມະເນນ ໂຍທິນ | 50.000 ກີບ |
| 14. | ສົມມະເນນ ແຫລວ | 50.000 ກີບ |
| 15. | ສົມມະເນນ ສຸດຕາ | 100 ບາດ |
| 16. | ຄຸນແມ່ຂາວ ສີທາດ | 30.000 ກີບ |
| 17. | ຄຸນແມ່ຂາວ ກອງແພງ | 50.000 ກີບ |
| 18. | ຄຸນແມ່ຂາວ ພິມພາ | 50.000 ກີບ |
| 19. | ຄຸນແມ່ຂາວ ກົມມະລີ | 30.000 ກີບ |
| 20. | ຄຸນແມ່ຂາວ ບົວພັນ | 1.000 ບາດ |
| 21. | ຄຸນແມ່ຂາວ ບຸນທະວີ | 50.000 ກີບ |
| 22. | ຄຸນແມ່ຂາວ ກົງ ວົງດາລາ | 500 ບາດ |
| 23. | ຄຸນແມ່ຂາວ ຖັນ | 100.000 ກີບ |
| 24. | ຄຸນແມ່ຂາວ ອົມມະລາ | 200 ບາດ |
| 25. | ຄຸນແມ່ຂາວ ບົວຈັນ | 50.000 ກີບ |
| 26. | ຄຸນແມ່ຂາວ ທອມ | 220.000 ກີບ |

| | | |
|---|---|---|
| 27. | ຄຸນແມ່ຂາວ ພັນ | 30.000 ກີບ |
| 28. | ຄຸນແມ່ຂາວ ປານ | 20.000 ກີບ |
| 29. | ຄຸນແມ່ຂາວ ສີສົມພູ | 50.000 ກີບ |
| 30. | ຄຸນແມ່ຂາວ ບົວແພງ | 50.000 ກີບ |
| 31. | ຄຸນແມ່ຂາວ ເພັດ | 500 ບາດ |
| 32. | ຄຸນແມ່ຂາວ ຈັນທາ | 500 ບາດ |
| 33. | ຄຸນແມ່ຂາວ ແພງຕາ | 500 ບາດ |
| 34. | ຄຸນແມ່ຂາວ ພູມມີໄຊ | 1.000 ບາດ |
| 35. | ຄຸນແມ່ຂາວ ລັດສະໝີ | 1.000 ບາດ |
| 36. | ຄຸນແມ່ຂາວ ແກ້ວ | 200.000 ກີບ |
| 37. | ຄຸນແມ່ຂາວ ທຸມມາ | 50.000 ກີບ |
| 38. | ຄຸນແມ່ຂາວ ພິມພາ | 100.000 ກີບ |
| 39. | ຄຸນແມ່ຂາວ ຂຽນ | 200 ບາດ |
| 40. | ຄຸນແມ່ຂາວ ອ່ອນຕາ | 500 ບາດ |
| 41. | ຄຸນແມ່ຂາວ ເຊຍ | 30.000 ກີບ |
| 42. | ຄຸນແມ່ຂາວ ວັນ | 50.000 ກີບ |
| 43. | ຄຸນແມ່ຊີ ສຸກ | 50.000 ກີບ |
| 44. | ຄຸນແມ່ຊີ ບຸນມາ | 1.000 ບາດ |
| 45. | ຄຸນແມ່ຊີ ຄຳຕາ | 1.000 ບາດ |
| 46. | ຄຸນແມ່ຊີ ທອງສີ ອຸດທະລາດ | 2.000.000 ກີບ |
| 47. | ນາງ ປາໂຣມາ | 10.000 ກີບ |
| 48. | ຄອບຄົວ ແມ່ຕູ້ເບັງ | 120.000 ກີບ + 200 ບາດ |
| 49. | ແມ່ອອກ ຄຳຕັນ | 50.000 ກີບ |
| 50. | ແມ່ອອກ ໝີງ | 100.000 ກີບ |
| 51. | ແມ່ອອກ ສົມແດງ | 30.000 ກີບ |
| 52. | ແມ່ຕູ້ ດວງປີ | 10.000 ກີບ |
| 53. | ຄອບຄົວ ບຸນທັນ | 300.000 ກີບ |
| 54. | ຄຸນແມ່ບົວແກ້ວ | 1.000.000 ກີບ |



ຫາງໃຫຍ່ຢ່າເພິ່ງຈອບ ລູກອ່ອນຢ່າອູ້ມຮັດ ເປັນເຈົ້າວັດຢ່າໃຫ້ອາຫານ
ມີຊ້າງສານຢ່າຜູກໄວ້ໃນເມືອງ ຢາກໄປນິພພານ ໃຫ້ຂ້າອາຈາຣຍ໌ທັງສີ່

ບົວບໍ່ໃຫ້ຊ້າ ນ້າບໍ່ໃຫ້ຂຸ່ນ ປາໃນໜອງເອົາກິນໃຫ້ໄດ້